**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ນາຍົກລັດຖະມົນຕີ ເລກທີ /ນຍ

ນະຄອນຫຼວງວຽງຈັນ, ວັນທີ

# ດຳລັດ
## ວ່າດ້ວຍການເປັນຄູ່ຮ່ວມ ລະຫວ່າງ
## ພາກລັດ-ພາກເອກະຊົນ ຢູ່ ສປປ ລາວ

- ອີງຕາມ ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບເລກທີ 25/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- ອີງຕາມ ກົດໝາຍວ່າດ້ວຍການ ລົງທຶນຂອງລັດ ສະບັບເລກທີ 08/ສພຊ, ລົງວັນທີ 5 ກໍລະກົດ 2012;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2004;
- ອີງຕາມ ກົດໝາຍວ່າດ້ວຍງົບປະມານຂອງລັດ ສະບັບເລກທີ 02/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ ສະບັບເລກທີ 14/ສພຊ, ລົງວັນທີ 5 ກໍລະກົດ 2012;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການ ດ້ວຍທຶນຂອງລັດ ສະບັບເລກທີ 03/ນຍ, ລົງວັນທີ 09 ມັງກອນ 2004;

## ນາຍົກລັດຖະມົນຕີ ອອກດຳລັດ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1. ນິຍາມຄຳສັບ**

ຄຳສັບຕ່າງໆໃນດຳລັດສະບັບນີ້ ມີຄວາມໝາຍດັ່ງນີ້:

| | |
|---|---|
| ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ | ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ແມ່ນການຕົກລົງ ລະຫວ່າງພາກ ລັດ ແລະ ພາກເອກະຊົນ ເພື່ອຈຸດປະສົງການ ສະໜອງ ໂຄງການ ຫລື ການບໍລິການ ເພື່ອຈັດຕັ້ງປະຕິບັດ ໂຄງການ ເພື່ອຜົນປະໂຫຍດ ລວມ ບົນພື້ນຖານສັນຍາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ |
| ຜູ້ເຂົ້າແຂ່ງຂັນປະມູນ | ບຸກຄົນ, ກຸ່ມ ຫຼື ນິຕິບຸກຄົນ ພາຍໃນ ຫລື ຕ່າງປະເທດ ທີ່ມີຄຸນນະວຸດທິ ເພື່ອເຂົ້າຮ່ວມໃນຂະບວນການການຄັດເລືອກ ກ່ຽວກັບໂຄງການຄູ່ຮ່ວມພາກລັດ-ພາກເອກະຊົນ. |
| ໜີ້ສິນທີ່ອາດຈະມີຂຶ້ນ ໃນອານາຄົດ | ພັນທະໃນການຊຳລະທີ່ເກີດ ຈາກສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນທີ່ມີຜົນ ຫຼື ຈາກກົດໝາຍຂອງ ສປປ ລາວ, ເຊິ່ງການເກີດຂຶ້ນ, ເວລາ ແລະ ມູນຄ່າຂອງມັນ ແມ່ນຂຶ້ນກັບເຫດການ ຫຼື ສະພາບແວດລ້ອມທີ່ມີລັກສະນະບໍ່ແນ່ນອນໃນອະນາຄົດ. ການຈັດສັນຄວາມສ່ຽງຈຳນວນໜຶ່ງຂອງສັນຍາການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ໃຫ້ແກ່ລັດຖະບານ ສາມາດເຮັດໃຫ້ເກີດໜີ້ສິນທີ່ອາດຈະມີຂຶ້ນ ໃນອານາຄົດແກ່ລັດຖະບານ. |
| ຄະນະກຳມະການ ປະເມີນຜົນ | ຄະນະກຳມະການປະເມີນຜົນ ແມ່ນຄະນະກຳມະການຍ່ອຍ ຂອງອົງການ ຈັດຕັ້ງປະຕິບັດໂຄງການ ທີ່ປະຕິບັດການທົບທວນຄືນບັນຫາການປະເມີນຜົນທີ່ຖືກເລືອກ ຢ່າງລະອຽດ. |
| ບົດສຶກສາຄວາມອາດ ສາມາດເປັນໄປໄດ້ (ບົດວິພາກ) | ເອກະສານທີ່ອະທິບາຍຮູບແບບລັກສະນະ ຂອງໂຄງການຄູ່ຮ່ວມພາກລັດ- ພາກເອກະຊົນ ແລະ ສະໜອງຂໍ້ມູນຂ່າວສານຢ່າງພຽງພໍໃຫ້ແກ່ລັດຖະ ບານ ເພື່ອດຳເນີນງານ ຫຼື ຈັດການປະມູນໂຄງການ ໂດຍຜ່ານການປະເມີນຢ່າງຮອບດ້ານດັ່ງນີ້: ຄວາມສອດຄ່ອງດ້ານ |

| | |
|---|---|
| | ເຕັກນິກ, ຜົນປະໂຫຍດ ດ້ານເສດຖະກິດ-ສັງຄົມ, ຄວາມອາດສາມາດທາງດ້ານກົດໝາຍ ແລະ ການເງິນ, ລັກສະນະຄວາມສ່ຽງ, ຄວາມຍືນຍົງທາງດ້ານງົບປະມານ, ສັງຄົມ ແລະ ສິ່ງແວດລ້ອມ ແລະ ຂອບເຂດການສະໜັບສະໜູນຂອງລັດຖະບານ (ຖ້າຕ້ອງການ). |
| ຂໍ້ສະເໜີທາງດ້ານການເງິນ | ຂໍ້ສະເໜີທາງດ້ານການເງິນ ທີ່ຍື່ນໂດຍຜູ້ເຂົ້າແຂ່ງຂັນປະມູນ ເພື່ອຕອບສະໜອງ ແລະ ປະຕິບັດຕາມເງື່ອນໄຂທີ່ກຳນົດໄວ້ໃນໜັງສືເຊີນຍື່ນຂໍ້ສະ ເໜີ ຫຼື ໃນຂອບຂອງສັນຍາໂດຍກົງ ຫຼື ຂໍ້ສະເໜີທີ່ບໍ່ຮຽກເຊີນ. |
| ລັດຖະບານ | ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| ການ ສະຫນັບສະຫນູນ ຂອງລັດຖະບານ | ການສະຫນັບສະຫນູນໃນຮູບແບບ ໃດ-ນຶ່ງ ເຊັ່ນ ການ ປະກອບສວ່ນ, ການຮັບປະກັນ, ການຖົມຊຸມ ຫລືການຊວ່ຍເຫລືອ ອື່ນໆທີ່ລັດຖະບານສະຫນອງ ໃຫ້ ໂຄງການ ການເປັນຄູ່ຮ່ວມ ລະຫວ່າງພາກລັດ-ພາກເອກະຊົນ |
| ຂໍ້ສະເນີ ໂຄງການ ເບື້ອງຕົ້ນ | ຂໍ້ສະເນີ ໂຄງການໂດຍຫຍໍ້ ທີ່ປະຕິບັດຕາມຂໍ້ກຳນົດ ທີ່ລະບຸຢູ່ໃນດຳລັດ ແລະ ເອກະສານຄັດຕິດ |
| ຄະນະ ກຳມະການລົງທຶນ | ຄະນະ ກຳມະການສົ່ງເສີມການລົງທຶນ ລະດັບຊາດ ໂດຍສອດຄ່ອງກັບ........ |
| ຜູ້ເຂົ້າແຂ່ງຂັນປະມູນທີ່ໄດ້ຊະນະ | ຜູ້ເຂົ້າແຂ່ງຂັນປະມູນ ທີ່ຖືກຄັດເລືອກໃນເວລາປິດການປະມູນ ໃຫ້ເປັນຜູ້ຊະນະ ເຊິ່ງຖືກເຊີນໂດຍອົງການຈັດຕັ້ງປະຕິບັດ ໂຄງການ ເພື່ອເຮັດສັນຍາການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ. |
| ບົດລາຍງານການປະເມີນ ດ້ານຄຸນນະວຸດທິ ລວ່ງຫນ້າ | ບົດລາຍງານການປະເມີນຜົນດ້ານຄຸນນະວຸດທິລ່ວງໜ້າ ຂອງຜູ້ເຂົ້າແຂ່ງຂັນປະມູນ ທີ່ອະທິບາຍການປະເມີນຂໍ້ສະເໜີ ໂດຍສົມທຽບກັບມາດຕະ ຖານ-ເງື່ອນໄຂການຄັດເລືອກ ແລະ ກຳນົດບັນດາບໍລິສັດທີ່ຖືກຄັດເລືອກເພື່ອຈັດເຂົ້າໃນບັນຊີສັ້ນ. |
| ມູນຄ່າຂອງໂຄງການ | ລາຍຈ່າຍທັງໝົດ ສຳລັບການອອກແບບ, ການກໍ່ສ້າງ, ການບູລະນະຮັກສາ ແລະ ການດຳເນີນງານ ຂອງໂຄງການຄູ່ຮ່ວມພາກລັດ-ພາກເອກະຊົນ, ເຊິ່ງບໍ່ລວມເອົາມູນຄ່າຂອງສິ່ງອຳນວຍຄວາມສະດວກທີ່ມີແລ້ວ, ທີ່ດິນ ແລະ ສິດກ່ຽວກັບທາງຜ່ານ. |

| | |
|---|---|
| ທຶນສຳລັບການກະກຽມໂຄງການ | ….. |
| ວິສາຫະກິດຂອງໂຄງການ | ວິສາຫະກິດທີ່ສ້າງຕັ້ງຂື້ນໂດຍພາກສ່ວນເອກະຊົນ ເພື່ອວັດຖຸປະສົງໃນການເຮັດສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ແລະ ເພື່ອປະຕິ ບັດສັນຍາດັ່ງກ່າວ. |
| ອົງການຈັດຕັ້ງປະຕິບັດໂຄງການ | ກະຊວງຫລື ອົງການທຽບເທົ່າ, ແຂວງ ແລະ ອົງການທ້ອງຖິ່ນ ທີ່ຮັບຜິດຊອບການກະກຽມ, ການຍື່ນປະມູນ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາ ສັນຍາ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ . |
| ສັນຍາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ | ສັນຍາ ຜູກພັນຊຶ່ງກັນ ແລະ ກັນ ລະຫວ່າງ ລັດຖະບານ ແລະ ພາກເອກະຊົນກ່ຽວກັບໂຄງການ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ |
| ໂຄງການ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ | ເປັນການຮ່ວມກັນ ລະຫວ່າງ ລັດຖະບານ ແລະ ພາກເອກະຊົນໂດຍຜ່ານລະບົບປະມູນທີ່ ໂປ່ງໃສ ແລະ ເປີດກ້ວາງ ສຳລັບການສ້າງ ແລະ/ຫລື ຄຸ້ມຄອງບໍລິຫານ ໂຄງລ່າງ ຫລື ການບໍລິການເພື່ອຈຸດປະສົງ ຂອງມະຫາຊົນ ແລະ ໃນເວລາອັນແນ່ນອນ |
| ໜັງສືເຊີນເຂົ້າຮ່ວມ ການປະມູນ | ໜັງສືເຊີນທີ່ອອກໂດຍອົງການຈັດຕັ້ງຂອງລັດຖະບານ ຊຶ່ງປະກອບດ້ວຍເງື່ອນໄຂດ້ານຄຸນນະວຸດທິ ທີ່ເຊີນໃຫ້ພາກສ່ວນເອກະຊົນ ຍື່ນສະເໜີເຂົ້າຮ່ວມໃນການປະມູນ ຂອງໂຄງການຄູ່ຮ່ວມພາກລັດ- ພາກເອກະຊົນ. |
| ໜັງສືເຊີນຍື່ນຂໍ້ສະເໜີ | ໜັງສືເຊີນທີ່ອອກໂດຍອົງການຈັດຕັ້ງຂອງລັດຖະບານ ເຖິງບັນດາຜູ້ເຂົ້າແຂ່ງຂັນປະມູນ ເຊິ່ງປະກອບມີຂໍ້ກຳນົດສະເພາະຂອງເງື່ອນໄຂຂອງ ໂຄງການ, ລະບຽບຂັ້ນຕອນການຍື່ນປະມູນ, ມາດຕະຖານການປະເມີນຜົນການປະມູນ ແລະ ຕົວແບບຂອງສັນຍາການເປັນຄູ່ຮ່ວມພາກລັດ- ພາກເອກະຊົນ. |
| ໄລຍະເວລາຍື່ນຄຳຮ້ອງຟ້ອງ | ກຳນົດເວລາ ທີ່ອະນຸຍາດໃຫ້ຜູ້ເຂົ້າຮ່ວມປະມູນ ຍື່ນຄຳຮ້ອງຟ້ອງຫລື ຄຳຮ້ອງຂໍ ທາສູນ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ |
| ຂໍ້ສະເໜີທາງດ້ານເຕັກນິກ | ບົດສະເໜີທີ່ເຮັດໂດຍຜູ້ເຂົ້າແຂ່ງຂັນປະມູນ ເພື່ອຍື່ນຕໍ່ອົງການຈັດຕັ້ງປະຕິບັດໂຄງການ ກ່ຽວກັບລາຍລະອຽດທາງດ້ານເຕັກນິກຂອງໂຄງການ ທີ່ຈະຖືກປະເມີນຜົນໂດຍອົງການຈັດຕັ້ງປະຕິບັດໂຄງການ |

| | |
|---|---|
| | ເພື່ອປະເມີນຜູ້ເຂົ້າແຂ່ງຂັນປະມູນ ແລະ ຄວາມສອດຄ່ອງເໝາະສົມຂອງໂຄງການ. |
| | |
| ການປະມູນ | ຂັ້ນຕອນທີ່ຈັດຕັ້ງ ເພື່ອວັດຖຸປະສົງໃນການຄັດເລືອກເອົາຄູ່ຮ່ວມສັນຍາພາກເອກະຊົນຢ່າງຍຸຕິທຳ ເພື່ອເຊັນສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ຢ່າງສອດຄ່ອງກັບກົດໝາຍການປະມູນຈັດຊື້ ແລະ ດຳລັດສະບັບນີ້. |
| ຂໍ້ສະເໜີທີ່ບໍ່ຖືກຮຽກຊວນ | ຂໍ້ສະເໜີກ່ຽວກັບການຈັດຕັ້ງປະຕິບັດ ໂຄງການໂຄງລ່າງພື້ນຖານ ຫລືການບໍລິການ ທີ່ໄດ້ຖືກກະກຽມ ໂດຍພາກເອກະຊົນ ທີ່ຮັບຄວາມສ່ຽງ ແລະ ຄ່າໃຊ້ຈ່າຍດ້ວຍຕົນເອງ ແລະ ບໍ່ໄດ້ຍື່ນຕາມການຮຽກເຊີນ ໂດຍລັດຖະບານ. |
| | |
| | |
| | |
| | |
| ມູນຄ່າຂອງເງິນ | ຜົນປະໂຫຍດສຸດທີ ໃຫ້ແກ່ລັດຖະບານ ຫລື ຜູ້ນຳໃຊ້ໂຄງລ່າງສາທາລະນະ ຫລື ການບໍລິການ ທີ່ກຳນົດ ເປັນທຶນ, ລາຄາ, ຄຸນນະພາບ, ປະລິມານ, ການໂອນຄວາມສ່ຽງ ຫລື ການລວມກັນທີ່ໄດ້ນຳສະເໜີ |
| ທຶນເພື່ອຮັບປະກັນຄວາມສາມາດມີປະສິດທິຜົນ | ການສະໜັບສະໜູນດ້ານການເງິນ ແກ່ໂຄງການຄູ່ຮ່ວມພາກລັດ-ພາກ ເອກະຊົນ ເພື່ອບັນລຸຄວາມສາມາດມີປະສິດທິຜົນທາງດ້ານການຄ້າ. |

## ມາດຕາ 2. ຈຸດປະສົງ

ດຳລັດສະບັບນີ້ກຳນົດ ຫລັກການ, ລະບຽການ ແລະ ມາດຕະການສົ່ງເສີມ ແລະ ຄຸ້ມຄອງການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ເພື່ອພັດທະນາພື້ນຖານໂຄງລ່າງ ແລະ ການບໍລິການ ທີ່ກ່ຽວຂ້ອງ ເຊິ່ງຢູ່ໃນຂອບເຂດແຜນການຂອງ ລັດຖະບານ, ຮັບປະກັນຄວາມໂປ່ງໃສ, ປະສິດທິພາບ ແລະ ປະສິດທິຜົນ, ຜົນປະໂຫຍດ ອັນຍຸດຕິທຳ ໃຫ້ແກ່ ພາກເອກະຊົນ ແລະ ລັດຖະບານ ແລະ ການພັດທະນາແບບຍືນຍົງ

**ມາດຕາ 3 ຫລັກການຕົ້ນຕໍ**

ວຽກງານການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ຈະຕ້ອງປະຕິບັດຕາມ ຫລັກການ ດັ່ງຕໍ່ໄປນີ້:

1. ຮັບປະກັນຄວາມຮັບຮູ້ຂອງມວນຊົນ ກ່ຽວກັບມູນຄ່າ, ຜົນປະໂຫຍດ ແລະ ຄວາມສ່ຽງທີ່ພົວພັນກັບ ການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ແລະ ການປະມູນແບບປົກກະຕິ;
2. ຮັກສາບົດບາດ ແລະ ຄວາມຮັບຜິດຊອບດ້ານສະຖາບັນທີ່ສໍາຄັນຕົ້ນຕໍ ແລະ ມອບໝາຍໜ້າທີ່ວຽກງານຢ່າງຈະແຈ້ງ ໃຫ້ແກ່ຫົວໜ່ວຍຂອງລັດຖະບານທີ່ມີສ່ວນກ່ຽວຂ້ອງ;
3. ຮັບປະກັນໃຫ້ທຸກລະບຽບການສໍາຄັນ ທີ່ມີຜົນກະທົບຕໍ່ການດໍາເນີນງານຂອງການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ມີຄວາມສອດຄ່ອງ, ຈະແຈ້ງ, ໂປ່ງໃສ ແລະ ໄດ້ຮັບການຈັດຕັ້ງປະຕິບັດ;
4. ກໍານົດບຸລິມະສິດຂອງໂຄງການລົງທຶນທີ່ສໍາຄັນ ຢູ່ລະດັບການເມືອງຂັ້ນສູງ;
5. ຮັບປະກັນໃຫ້ມີການພິຈາລະນາຄ່າຂອງເງິນ ໃນການຕົກລົງວ່າຈະນໍາໃຊ້ວິທີການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ຫຼື ວິທີການລົງທຶນຂອງລັດແບບປົກກະຕິ ໃນການດໍາເນີນໂຄງການພື້ນຖານໂຄງລ່າງຂອງລັດ;
6. ການຈັດສັນຄວາມສ່ຽງ ໃຫ້ແກ່ຝ່າຍສັນຍາທີ່ມີເງື່ອນໄຂດີທີ່ສຸດ ໃນການຄວບຄຸມຄວາມອາດສາມາດເກີດຂຶ້ນຂອງເຫດການຄວາມສ່ຽງ, ການຄຸ້ມຄອງຜົນກະທົບຂອງຄວາມສ່ຽງຕໍ່ໂຄງການ ແລະ ການຮອງຮັບຄວາມສ່ຽງດ້ວຍຄ່າໃຊ້ຈ່າຍທີ່ຕໍ່າທີ່ສຸດ;
7. ຮັບປະກັນໃຫ້ຂັ້ນຕອນການປະມູນ ມີຄວາມໂປ່ງໃສ, ມີການແຂ່ງຂັນ ແລະ ອີງໃສ່ກົດລະບຽບ ສໍາລັບການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ທີ່ມີການຮຽກຊວນ ແລະ ເຮັດໃຫ້ທຸກຂໍ້ສະເໜີທີ່ບໍ່ຖືກຮຽກຊວນ ຕ້ອງປະເຊີນກັບສິ່ງທ້າທາຍຂອງຕະຫຼາດ;
8. ຮັບປະກັນໃຫ້ໂຄງການຄູ່ຮ່ວມ ພາກລັດ-ພາກເອກະຊົນ ມີປະສິດທິຜົນທາງດ້ານເສດຖະກິດ ແລະ ສັງຄົມ ແລະ ສາມາດມີປະສິດທິຜົນທາງດ້ານການຄ້າ ແລະ ທະນາຄານ;
9. ປະຕິບັດຕໍ່ການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ຢ່າງໂປ່ງໃສໃນຂັ້ນຕອນງົບປະມານ; ຄຸນຄ່າ, ການແຮຄ່າເຊື່ອມ, ເງິນທຶນ; ຕິດຕາມກວດກາ ແລະ ເປີດເຜີຍຢ່າງລະອຽດມູນຄ່າໃຊ້ຈ່າຍທັງໝົດ ແລະ ໜີ້ສິນບັງເອີນທີ່ເກີດຈາກ ການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ໃນເອກະສານງົບປະມານ;
10. ລະມັດລະວັງຕໍ່ການຟຸມເຟືອຍ ແລະ ການສໍ້ລາດບັງຫຼວງ ໂດຍຮັບປະກັນຄວາມສຸດຈະລິດຂອງຂັ້ນຕອນການປະມູນ;
11. ປະຕິບັດຫຼັກການທົ່ວໄປຄື: ລັດຖະບານຈະບໍ່ປະຕິບັດວິທີການເຈລະຈາຄືນໃໝ່.
12. ຮັບປະກັນ ການກວດກາ ເພື່ອລຸດຜ່ອນຜົນກະທົບດ້ານລົບ; ທາງດ້ານສັງຄົມ, ສິ່ງແວດລ້ອມ ແລະ ຕໍ່ຜູ້ຍິງ ແລະເດັກນ້ອຍ ແລະ ເພີ່ມທະວີ ຜົນປະໂຫຍດຂອງຂະເຈົ້າ ຢູ່ໃນ

ການຄຸ້ມຄອງ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ແລະ ການຈັດຕັ້ງປະຕິບັດ ສິ່ງເຫລົ່ານັ້ນ

**ມາດຕາ 4. ຂອບເຂດ**

**ມາດຕາ 4.1**

ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ແມ່ນສັນຍາ ລະຫວ່າງ ພາກສ່ວນລັດ ກັບ ພາກສ່ວນເອກະຊົນ ເພື່ອຈຸດປະສົງໃນການສະໜອງໂຄງການ ຫຼື ການບໍລິການ, ເຊິ່ງຕາມທຳມະດາແມ່ນສະໜອງໂດຍພາກສ່ວນລັດ, ເພື່ອຈັດຕັ້ງປະຕິບັດໂຄງການເພື່ອຜົນປະໂຫຍດຂອງສາທາລະນະຊົນ.

**ມາດຕາ 4.2**

ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ແມ່ນຂໍ້ຕົກລົງສັນຍາ ແລະ ມີລັກສະນະສະເພາະ ດັ່ງນີ້:

1. ເປັນຂໍ້ຕົກລົງສັນຍາ ລະຫວ່າງ ອົງການຈັດຕັ້ງປະຕິບັດໂຄງການ ແລະ ອົງການຂອງເອກະຊົນ;
2. ກ່ຽວຂ້ອງກັບການສະໜອງການບໍລິການສາທາລະນະ ຫຼື ພື້ນຖານໂຄງລ່າງ ຊຶ່ງອົງການຈັດຕັ້ງປະຕິບັດໂຄງການ ເປັນຜູ້ຮັບຜິດຊອບ;
3. ການບໍລິການ ຫຼື ພື້ນຖານໂຄງລ່າງທີ່ຕ້ອງການ ຖືກກຳນົດເປັນໝາກຜົນສົ້ນອອກ;
4. ຄວາມສ່ຽງທີ່ສຳຄັນຖືກໂອນໃຫ້ແກ່ພາກສ່ວນເອກະຊົນ, ເຮັດໃຫ້ການລົງທຶນເອກະຊົນ ແລະ ຜົນຕອບແທນດ້ານການເງິນຂອງມັນ ຕິດພັນກັບຜົນການດຳເນີນງານຂອງມັນ;
5. ຖືກຈັດຫາໂດຍຜ່ານຂັ້ນຕອນການປະມູນທີ່ມີການແຂ່ງຂັນ ຫຼື ເງື່ອນໄຂທີ່ມີການແຂ່ງຂັນ; ສ່ວນຫລາຍແມ່ນພາກເອກະຊົນ ເປັນຜູ້ລົງທຶນທັງໝົດ ຫລື ບາງສ່ວນ

**ມາດຕາ 4.3**

ທຸກໂຄງການຄູ່ຮ່ວມພາກລັດ-ພາກເອກະຊົນ ຕ້ອງໄດ້ຮັບການອະນຸມັດຈາກຄະນະກຳມະການລົງທຶນ ແລະ ຜ່ານການປະມູນຕາມກົດລະບຽບ ແລະ ຂໍ້ກຳນົດຂອງດຳລັດສະບັບນີ້, ເວັ້ນເສຍແຕ່ຖືກຍົກເວັ້ນຢ່າງເປັນທາງການ ຈາກເງື່ອນໄຂດັ່ງກ່າວໂດຍລັດຖະບານ.

**ມາດຕາ 4.4**

ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ບໍ່ສາມາດດຳເນີນໄດ້ ໃນຂະແໜງການບັນຊີປິດທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍຂອງດຳລັດສະບັບນີ້,ນອກຈາກກໍລະນີໄດ້ຮັບ

ການຍົກເວັ້ນເປັນທາງການ ຈາກລັດຖະບານ ເຊິ່ງເອກະສານຊ້ອນທ້າຍນີ້ ສາມາດປັບປຸງເປັນແຕ່ລະໄລຍະ

**ມາດຕາ 5** ຄວາມຮັບຜິດຊອບ ຂອງຄະນະກຳມະການ ລົງທຶນ

ຄະນະກຳມະການລົງທຶນ ມີໜ້າທີ່ຮັບຮອງລະບຽບການ ແລະ ເອກະສານ ມາດຕະຖານກ່ຽວກັບການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ທີ່ຈຳເປັນເພື່ອໃຫ້ບັນດາອົງການຈັດຕັ້ງປະຕິບັດໂຄງການນຳໃຊ້ ແລະ ຊີ້ນຳ ແລະຮັບຮອງ ວຽກງານ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ກ່ອນທີ່ຈະມີການປະມູນ ແລະ ເຊັນສັນຍາ. ຄະນະກຳມະການລົງທຶນ ມີໜ້າທີ່ແຕ່ພຽງຜູ້ດຽວ ໃນການຊີ້ນຳແລະ ຮັບຮອງ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ຊຶ່ງຕາງໜ້າໃຫ້ລັດຖະບານທັງໝົດ. ພາຍຫລັງມີການຮັບຮອງ ສັນຍາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ໂດຍສອດຄ່ອງກັບມາດຕາ 18 ຂອງດຳລັດ. ກະຊວງແຜນການ ແລະ ການລົງທຶນ ຈະເປັນຜູ້ເຊັນສັນຍາ ໃນນາມລັດຖະບານ.

**ມາດຕາ 6 ການສ້າງຕັ້ງ, ໂຄງປະກອບ ແລະ ຄວາມຮັບຜິດຊອບ ຂອງສູນການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ**

**ມາດຕາ 6.1**

ລັດຖະບານຕ້ອງສ້າງຕັ້ງສູນການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ເພື່ອຈຸດປະສົງໃນການຊີ້ນຳ,ອຳນວຍຄວາມສະດວກ ແລະ ສົ່ງເສີມ ແຜນການການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ແລະ ປັບປຸງຄວາມຮູ້ ແລະ ຄວາມສາມາດ ໃນການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ. ສູນດັ່ງກ່າວມີພາລະບົດບາດເປັນ ຫ້ອງການເລຂາທິການ ຂອງ ຄະນະກຳມະການລົງທຶນ.

**ມາດຕາ 6.2**

ລັດຖະບານຈະອອກດຳລັດ ສະເພາະເພື່ອຮັບຮອງເອົາ ການສ້າງຕັ້ງສູນການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ.

**ມາດຕາ 6.3**

ກະຊວງແຜນການ ແລະ ການລົງທຶນ ຈະເຄື່ອນໄຫວ ແລະ ຮັບຜິດຊອບ ໃນນາມສູນການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ກ່ອນ ການສ້າງຕັ້ງສູນການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ

**ມາດຕາ 6.4**

ພາລະບົດບາດຂອງສູນການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ປະກອບດ້ວຍ:

1. ການຊີ້ນຳການປະມູນ ແລະ ການເຮັດສັນຍາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ
2 . ເປັນສູນກາງໃນການປະສານງານກັບຂະແໜງການທີ່ກ່ຽວຂ້ອງ ເພື່ອປະເມີນ ແລະ ກຳນົດ ຂໍ້ສະເໜີໂຄງການເບື້ອງຕົ້ນ ສຳລັບການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ແລະ ຍື່ນຂໍຮັບຮອງຈາກລັດຖະບານ ໂດຍຜ່ານ ຄະນະກຳມະການລົງທຶນ
3 . ການສ້າງເງື່ອນໄຂມາດຕະຖານໃນການຄັດເລືອກ ສຳລັບໂຄງການ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ
4 . ການຄັດເລືອກເອົາຜູ້ເຂົ້າຮ່ວມປະມູນທີ່ໄດ້ຊະນະ ໂດຍຜ່ານຂະບວນການປະມູນ ໂດຍສອດຄ່ອງກັບ ຂໍ້ກຳນົດໃນດຳລັດສະບັບນີ້
5 . ການພິຈາລະນາ ຂໍ້ສະເໜີໃນການເຊັນ ສັນຍາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ຈາກລັດຖະບານ.
6 . ການປະສານງານການປະເມີນໂຄງການຄູ່ຮ່ວມພາກລັດ-ພາກເອກະຊົນ ເພື່ອຂໍການອະນຸມັດຈາກລັດຖະບານ ໂດຍຜ່ານຄະນະກຳມະການລົງທຶນ.
7 . ການອຳນວຍຄວາມສະດວກ ໃຫ້ແກ່ສະພາບແວດລ້ອມທາງດ້ານກົດໝາຍ ແລະ ລະບຽບການຂອງການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ແລະ ການສົ່ງເສີມແຜນງານການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ.
8 . ການຄຸ້ມຄອງຄວາມຮູ້ ກ່ຽວກັບການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ດ້ວຍການພັດທະນາບົດແນະນຳ ກ່ຽວກັບການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ, ເຄື່ອງມື ແລະ ສັນຍາທີ່ໄດ້ມາດຕະຖານ, ການຄຸ້ມຄອງຖານຂໍ້ມູນ ກ່ຽວກັບການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ແລະ ໄຊຕ໌ ອິນເຕີເນັດ (internet site).
9 . ການບໍລິຫານທຶນສຳລັບການກະກຽມໂຄງການ ແລະ ການຄຸ້ມຄອງທີ່ປຶກສາດ້ານການກະກຽມໂຄງການ ແລະ ການດຳເນີນງານ ທີ່ຖືກວ່າຈ້າງດ້ວຍທຶນສຳລັບການກະກຽມໂຄງການ.
10 ການສ້າງຄວາມສາມາດ ໃຫ້ແກ່ອົງການຈັດຕັ້ງປະຕິບັດໂຄງການ.

11 ລາຍງານຄວາມຄືບໜ້າ ປະຈຳງວດ ປະຈຳ 6ເດືອນ , ປະຈຳປີໃຫ້ແກ່ ຄະນະກຳມະການ ລົງທຶນ ກ່ຽວກັບສະພາບ, ຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດໂຄງການການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ທີ່ມີຢູ່ ແລະ ໂຄງການໃນອານາຄົດ.

**ມາດຕາ 6.5**

ລັດຖະບານເປັນຜູ້ຮັບຮອງ ກົດລະບຽບ, ວິທີການດຳເນີນງານ ແລະ ການກະກຽມທຶນ ຂອງສູນການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ລວມທັງການຊ່ວຍເຫລືອ ການພັດທະນາ ຢ່າງເປັນທາງການ.

## ມາດຕາ 7 ອົງການຈັດຕັ້ງປະຕິບັດໂຄງການ

**ມາດຕາ 7.1**

ອົງການຈັດຕັ້ງປະຕິບັດໂຄງການເປັນຜູ້ຮັບຜິດຊອບ ການກຳນົດ, ການພັດທະນາ, ການກະກຽມ, ການປະມູນ ແລະ ການຕິດຕາມການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ພາຍໃນຂອບເຂດອຳນາດຕຸລາການ ຂອງຕົນໂດຍສອດຄ່ອງ ກັບດຳລັດສະບັບນີ້

**ມາດຕາ 7.2**

ອົງການຈັດຕັ້ງປະຕິບັດໂຄງການ ເປັນຜູ້ຮັບຜິດຊອບ ທີມງານ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ຊຶ່ງນຳພາໂດຍ ເຈົ້າໜ້າທີ່ໂຄງການ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ຊຶ່ງມີຊັ້ນຕຳແໜ່ງຢ່າງນ້ອຍ ທຽບເທົ່າກັບຮອງ ຫົວໜ້າກົມໃຫຍ່ ເພື່ອດຳເນີນໂຄງການການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ. ອົງການຈັດຕັ້ງປະຕິບັດໂຄງການ ຈະຕ້ອງສ້າງລະບົບ ບໍລິຫານ ແລະ ຄຸ້ມຄອງສັນຍາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ທີ່ໄດ້ເຊັນຢ່າງເໝາະສົມ

## ມາດຕາ 8. ການສ້າງຕັ້ງພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງພາກສ່ວນເອກະຊົນ

**ມາດຕາ 8.1**

ຝ່າຍເອກະຊົນເປັນທີວໜ່ວຍ ທີ່ເຊັນສັນຍາຊຶ່ງຢູ່ໃນຮູບແບບ ບໍລິສັດ ຈຳກັດຜູ້ດຽວ ຫລື ບໍລິສັດຈຳກັດ ບໍລິສັດມະຫາຊົນ ຫລື ກຸ່ມບໍລິສັດ **ມາດຕາ 8.2**
ພາກເອກະຊົນ ສາມາດເປັນ ພາຍໃນ ຫລື ຕ່າງປະເທດ

**ມາດຕາ 8.3**

ບໍລິສັດທີ່ລັດຖະບານລາວ ຫລື ລັດວິສາຫະກິດລາວ ຖືຮຸ້ນຫລາຍກວ່າ 49% ບໍ່ສາມາດເປັນ ພາກເອກະຊົນ ໃນໂຄງການ ຄູ່ຮ່ວມ ພາກລັດ-ພາກເອກະຊົນ. ລັດວິສາຫະກິດລາວ ທີ່ຖືຮຸ້ນ ຢູ່ໃນວິສາຫະກິດໂຄງການ ຈະບໍ່ສາມາດ ເປັນຜູ້ຮັບເໝົາຍ່ອຍ ຂອງວິສາຫະກິດໂຄງການ. ລັດວິສາຫະກິດ ທີ່ອົງການຈັດຕັ້ງປະຕິບັດໂຄງການ ຖືຮຸ້ນສ່ວນນຶ່ງ ຫລື ທັງໝົດ ບໍ່ມີສິດເຂົ້າຮ່ວມໃນໂຄງການຫ

**ມາດຕາ 8.4**
ຝ່າຍເອກະຊົນທີ່ເຊັນສັນຍາ ມີພາລະບົດບາດໃນການ ເຂົ້າຮ່ວມໂຄງການພັດທະນາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ຮ່ວມກັບລັດຖະບານ ພາຍໃຕ້ສັນຍາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ໂດຍສອດຄ່ອງກັບດຳລັດ ສະບັບນີ້ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສ.ປ.ປ.ລາວ.

**ມາດຕາ 8.5**

ຝ່າຍເອກະຊົນ ມີສິດເຂົ້າຮ່ວມໃນການປະມູນ ແລະ ການຈັດຕັ້ງປະຕິບັດໂຄງການການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ໂດຍທີ່ຝ່າຍເອກະຊົນນັ້ນ ຕ້ອງປະຕິບັດເງື່ອນໄຂທີ່ກຳນົດໄວ້ຢູ່ໃນດຳລັດ ສະບັບນີ້ ແລະ ເອກະສານຊ້ອນທ້າຍ

**ມາດຕາ 8.6**

ຝ່າຍເອກະຊົນ ທີ່ເຊັນສັນຍາ ການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ຈະຕ້ອງສ້າງຕັ້ງ ເປັນວິສາຫະກິດໂຄງການ ໂດຍສອດຄ່ອງກັບ ກົດໝາຍລົງທຶນທີ່ກ່ຽວຂ້ອງ

**ມາດຕາ 8.7**

ຝ່າຍເອກະຊົນຈະຕ້ອງ:

1. ເປີດບັນຊີທະນາຄານ ກັບທະນາຄານທຸລະກິດ ທີ່ຕັ້ງຢູ່ ສ.ປ.ປ.ລາວ ແລະ ນຳເຂົ້າ/ ສົ່ງອອກທຶນ ໂດຍສອດຄ່ອງກັບກົດໝາຍລາວ.

2. ນຳເຂົ້າທຶນເພື່ອພັດທະນາໂຄງການການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ໂດຍສອດຄ່ອງກັບມາດຕະຖານ ທີ່ກຳນົດໄວ້ ໃນເອກະສານປະມູນ ແລະ ສັນຍາການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ
3. ຈັດຕັ້ງປະຕິບັດໂຄງການ ການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ແລະ ຄຸ້ມຄອງບໍລິຫານ ໂຄງການ ການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນຢ່າງມີປະສິດທະຜົນ ໂດຍສອດຄ່ອງກັບ ມາດຕະຖານ ທີ່ກຳນົດໄວ້ໃນເອກະສານປະມູນ ແລະ ສັນຍາການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ.
4. ຕິດຕາມ, ປະເມີນ, ສະຫລຸບ ແລະ ລາຍງານ ຄວາມຄືບໜ້າ ແລະຜົນຂອງການຈັດຕັ້ງປະຕິບັດ ໂຄງການ ການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ໃຫ້ແກ່ຄະນະກຳມະການລົງທຶນ, ອົງການຈັດຕັ້ງປະຕິບັດໂຄງການ ແລະ ຂະແໜງການທີ່ກ່ຽວຂ້ອງ
5. ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນ ໃນສັນຍາການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ, ພາກເອກະຊົນບໍ່ສາມາດໂອນ ຫລືມອບ ພັນທະ ແລະ ຜົນປະໂຫຍດ ທີ່ພົວພັນກັບສັນຍາການເປັນຄູ່ຮ່ວມ ເປັນບາງສ່ວນ ຫລື ທັງໝົດພາກລັດ-ພາກເອກະຊົນ ແມ່ນບໍ່ສາມາດມອບຫຼື ໂອນໃຫ້ແກ່ບຸກຄົນທີສາມໄດ້ ໂດຍບໍ່ມີການເຫັນດີຈາກຄະນະກຳມະການລົງທຶນ. ສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ຕ້ອງກຳນົດລາຍລະອຽດ ແລະ ເງື່ອນໄຂເພື່ອໂອນ ແລະ ມອບພັນທະ ຂອງຕົນ.
6. ຄວາມຮັບຜິດຊອບ ສະເພາະ ຂອງຝ່າຍເອກະຊົນ ຈະຖືກລະບຸ ໃນແຕ່ລະສັນຍາ ການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ
7. ສ້າງກົນໄກ ທີ່ມີປະສິດທິຜົນ ເພື່ອແກ້ໄຂຄຳຮ້ອງຟ້ອງທີ່ລູກຄ້າ ຫລື ຜູ້ຊົມໃຊ້ໂຄງລ່າງພື້ນຖານ
8. ຝ່າຍເອກະຊົນທີ່ເຊັນສັນຍາ ຈະບໍ່ປະຕິບັດສິ່ງທີ່ຖືກເກືອດຫ້າມ ໂດຍມາດຕາ 73 ຂອງກົດໝາຍ ສົ່ງເສີມການລົງທຶນ ຫລື ເກືອດຫ້າມໂດຍສະເພາະ ໂດຍສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ
9. ປະຕິບັດສິດອື່ນໆ ທີ່ກຳນົດໄວ້ໃນດຳລັດສະບັບນີ້ ແລະ ສັນຍາ ການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ.

**ມາດຕາ 9. ຄວາມສະດວກດ້ານກົດໝາຍ ແລະ ການເງິນ**

**ມາດຕາ 9.1**

ລັດຖະບານສົ່ງເສີມການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ດ້ວຍການກຳນົດໂຄງສ້າງດ້ານກົດໝາຍ ແລະ ລະບຽບການ ທີ່ອຳນວຍໃຫ້ແກ່ການມີສ່ວນຮ່ວມ ຂອງພາກສ່ວນເອກະຊົນພ້ອມທັງຄຳນຶງເຖິງຜົນປະໂຫຍດຂອງລັດ.

**ມາດຕາ 9.2**

ພ້ອມກັບການເຄົາລົບສິດ ແລະ ພັນທະທີ່ກຳນົດໄວ້ ຂອງຄູ່ສັນຍາຂອງພາກສ່ວນລັດ ແລະ ພາກສ່ວນເອກະຊົນ ແລະ ຮັບປະກັນຜົນປະໂຫຍດຂອງລັດນັ້ນ, ລັດຖະບານ ໂດຍຜ່ານຄະນະກຳມະການລົງທຶນ , ຍັງມີສິດດັດແກ້ ແລະ ເພີ່ມເຕີມໂຄງສ້າງດ້ານກົດໝາຍ ແລະ ລະບຽບການຂອງ ສປປ ລາວ ເພື່ອຮອງຮັບການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ໃນອະນາຄົດ.

**ມາດຕາ 9.3**

ລັດຖະບານສ້າງຕັ້ງທຶນສຳລັບການກະກຽມໂຄງການ ເພື່ອໃຊ້ຈ່າຍໃນການບໍລິການທີ່ປຶກສາ ແລະ ການບໍລິຫານອື່ນໆທີ່ພົວພັນກັບຂັ້ນຕອນການກະກຽມ, ການຈັດຕັ້ງ, ການປະມູນ,ການຕົກລົງເຊັນສັນຍາ ແລະ ການສະຫລຸບດ້ານການເງິນ ຂອງໂຄງການຄູ່ຮ່ວມພາກລັດ -ພາກເອກະຊົນ. ທຶນສຳລັບການກະກຽມໂຄງການ ອາດຈະໄດ້ຈາກທຶນງົບປະມານຂອງລັດ ແລະ ຈາກການຊ່ວຍເຫຼືອທາງການເພື່ອການພັດທະນາ. ທຶນສຳລັບການກະກຽມໂຄງການ ຕ້ອງຖືກບໍລິຫານໂດຍສູນຄູ່ຮ່ວມພາກລັດ-ພາກເອກະຊົນ ໂດຍເອົາເປັນທຶນໝູນວຽນ; ສະນັ້ນ ສູນຄູ່ຮ່ວມພາກລັດ-ພາກເອກະຊົນ ສາມາດເກັບ ແລະ ໄດ້ຮັບຄ່າທຳນຽມ ແລະ ເກັບຄືນມູນຄ່າທີ່ຈ່າຍຜ່ານທຶນສຳລັບການກະກຽມໂຄງການ. ຈຳນວນເງິນດັ່ງກ່າວຈະຖືກຮັກສາໄວ້ ແລະ ອະນຸຍາດໃຫ້ໃຊ້ຈ່າຍໂດຍສູນຄູ່ຮ່ວມພາກລັດ-ພາກເອກະຊົນ ເພື່ອຈຸດປະສົງທີ່ໄດ້ກຳນົດຂ້າງເທິງນັ້ນ. ບັນຫາການຄຸ້ມຄອງ ແລະ ການດຳເນີນງານຂອງທຶນສຳລັບການກະກຽມໂຄງການ ຈະຕ້ອງອະທິບາຍໃນບົດແນະນຳກ່ຽວກັບທຶນສຳລັບການກະກຽມໂຄງການ ທີ່ຈະຕ້ອງຖືກຮັບຮອງໂດຍຄະນະກຳມະການຄຸ້ມຄອງການລົງທຶນ.

**ມາດຕາ 9.4**

ເພື່ອສ້າງຄວາມສະດວກ ໃນການເຂົ້າຫາວິທີການປະຕິບັດທີ່ດີຂອງໂລກ ໃນການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ແລະ ຍົກລະດັບຄຸນນະພາບຂອງໂຄງການ, ການຄັດເລືອກເອົາທີ່ປຶກສາທີ່ນຳໃຊ້ທຶນສຳລັບການກະກຽມໂຄງການ ຕ້ອງເປີດໃຫ້ແກ່ບໍລິສັດພາຍໃນປະເທດ ແລະ ບໍລິສັດຕ່າງປະເທດ. ບົດແນະນຳ ກ່ຽວກັບການຄັດເລືອກ ແລະ ການຄຸ້ມຄອງທີ່ປຶກສາ ທີ່ນຳໃຊ້ທຶນສຳລັບການກະກຽມໂຄງການ ຈະຕ້ອງສ້າງຂຶ້ນໂດຍສູນຄູ່ຮ່ວມພາກລັດ-ພາກເອກະຊົນ ເພື່ອສະເໜີໃຫ້ຄະນະກຳມະການລົງທຶນ ຮັບຮອງເອົາ.

**ມາດຕາ 9.5**

ລັດຖະບານສົ່ງເສີມການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ດ້ວຍການກໍານົດໂຄງສ້າງດ້ານການເງິນ ທີ່ອໍານວຍໃຫ້ແກ່ການມີສ່ວນຮ່ວມຂອງພາກສ່ວນເອກະຊົນ. ໂຄງສ້າງດັ່ງກ່າວປະກອບດ້ວຍຄວາມສະດວກດ້ານການເງິນທີ່ມີໃນປະຈຸບັນ ແລະ ຄວາມສະດວກດ້ານການເງິນ ທີຈະກໍານົດຂຶ້ນ ເຊັ່ນ ເງິນຖົມຊຸມ ແລະ ການຄໍ້າປະກັນ ເພື່ອສະໜັບສະໜູນ ປະສິດທິຜົນ ທາງດ້ານການເງິນ ຂອງໂຄງການ ຄູ່ຮ່ວມ ພາກລັດ-ພາກເອກະຊົນ

**ມາດຕາ 9.6**

ໃນໄລຍະກະກຽມແຜນງົບປະມານຂອງລັດ, ລັດຖະບານຕ້ອງໃຫ້ບຸລິມະສິດແກ່ການຂຶ້ນແຜນງົບປະມານໃນຈໍານວນທີ່ຈໍາເປັນ ເພື່ອຕອບສະໜອງພັນທະໃນການໃຊ້ຈ່າຍ ຂອງອົງການຈັດຕັ້ງປະຕິບັດໂຄງການ ພາຍໃຕ້ສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ .

## ໝວດທີ II

## ການກໍານົດ ແລະ ການປະເມີນໂຄງການ

**ມາດຕາ 10. ບົດສະເໜີໂຄງການເບື້ອງຕົ້ນ**

**ມາດຕາ 10.1**

ອົງການທີ່ຖືກແຕ່ງຕັ້ງໂດຍຄະນະກໍາມະການລົງທຶນ ໃຫ້ເປັນອົງການຈັດຕັ້ງປະຕິບັດໂຄງການ ທີ່ຕ້ອງການພັດທະນາໂຄງການຄູ່ຮ່ວມພາກລັດ-ພາກເອກະຊົນ, ເຊິ່ງຍັງບໍ່ທັນມີບົດສຶກສາຄວາມອາດສາມາດເປັນໄປໄດ້ ໃນວັນທີທີ່ດໍາລັດສະບັບນີ້ ມີຜົນສັກສິດ ຕ້ອງໄດ້ສ້າງບົດສະເໜີໂຄງການເບື້ອງຕົ້ນ ໂດຍສອດຄ່ອງກັບເອກະສານຄັດຕິດ ຂອງດໍາລັດສະບັບນີ້ ຊຶ່ງຈະຕ້ອງຖືກຮັບຮອງໂດຍ ສູນການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ

**ມາດຕາ 10.2**

ອົງການຈັດຕັ້ງປະຕິບັດໂຄງການ ທີ່ຕ້ອງການສ້າງບົດສະເໜີໂຄງການເບື້ອງຕົ້ນ ສາມາດສະເໜີຂໍຄໍາແນະນໍາ ຂອງສູນຄູ່ຮ່ວມພາກລັດ-ພາກເອກະຊົນ ແລະ ສາມາດສະເໜີຂໍການຊ່ວຍເຫຼືອດ້ານວິຊາການ ຫຼື ດ້ານການເງິນ ຈາກທຶນສໍາລັບການກະກຽມໂຄງການ ເພື່ອສ້າງບົດສະເໜີໂຄງການເບື້ອງຕົ້ນດັ່ງກ່າວ.

**ມາດຕາ 10.3**

ສູນຄູ່ຮ່ວມພາກລັດ-ພາກເອກະຊົນ ສາມາດ, ດ້ວຍການລິເລີ່ມຂອງຕົນເອງ, ກຳນົດ ແລະ ສະເໜີໂຄງການ ຕໍ່ອົງການຈັດຕັ້ງປະຕິບັດໂຄງການ ທີ່ສາມາດພັດທະນາເປັນໂຄງການຄູ່ຮ່ວມ ພາກລັດ-ພາກເອກະຊົນ.

**ມາດຕາ 10.4**

ສູນການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ມີສິດປະຕິເສດ ບົດສະເໜີໂຄງການເບື້ອງຕົ້ນ ຖ້າວ່າບົດສະເໜີດັ່ງກ່າວ ບໍ່ສອດຄ່ອງກັບ ແຜນພັດທະນາ ເສດຖະກິດສັງຄົມ 5 ປີ ຕາມທີ່ໄດ້ນິຍາມໄວ້ ໂດຍກົດໝາຍການລົງທຶນຂອງລັດ ເລກທີ 08/ສພຊ ລົງວັນທີ 26 ພະຈິກ 2009

**ມາດຕາ 11. ບົດສຶກສາຄວາມອາດສາມາດເປັນໄປໄດ້ (ບົດວິພາກ)**

**ມາດຕາ 11.1**

ໃນກໍລະນີບົດສະເໜີໂຄງການເບື້ອງຕົ້ນໄດ້ຮັບການອະນຸມັດໂດຍສູນການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ, ອົງການຈັດຕັ້ງປະຕິບັດໂຄງການຕ້ອງກະກຽມບົດສຶກສາຄວາມອາດສາມາດເປັນໄປໄດ້ ສໍາລັບໂຄງການຄູ່ຮ່ວມພາກລັດ-ພາກ ເອກະຊົນ ໂດຍສອດຄ່ອງກັບເອກະສານຄັດຕິດ ຂອງດຳລັດສະບັບນີ້ ຊຶ່ງຈະຖືກຮັບຮອງໂດຍ ຄະນະກໍາມະການລົງທຶນ.

**ມາດຕາ 11.2**

ໂຄງການຄູ່ຮ່ວມພາກລັດ-ພາກເອກະຊົນ ຕ້ອງສອດຄ່ອງກັບ ລະບຽບການ ກ່ຽວກັບບົດສຶກສາຄວາມອາດສາມາດເປັນໄປໄດ້ ດັ່ງທີ່ກຳນົດໄວ້ໃນລະບຽບການ ແລະ ບົດແນະນຳ ກ່ຽວກັບຈັດຕັ້ງປະຕິບັດ ການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ. ລະບຽບການກ່ຽວກັບການສຶກສາຄວາມອາດສາມາດເປັນໄປໄດ້ ທີ່ໄດ້ກຳນົດພາຍໃຕ້ກົດໝາຍອື່ນ ຈະບໍ່ນຳໃຊ້ຕໍ່ກັບໂຄງການຄູ່ຮ່ວມພາກລັດ-ພາກເອກະຊົນ.

**ມາດຕາ 11.3**

ອົງການຈັດຕັ້ງປະຕິບັດໂຄງການ ຕ້ອງສະໜອງໃຫ້ແກ່ກະຊວງການເງິນ ການຄາດຄະເນກ່ຽວກັບການຕາຕະລາງການຊຳລະໂດຍກົງ, ການຮັບປະກັນ ຫລື ພັນທະອື່ນໆ ຊຶ່ງອົງການຈັດຕັ້ງ

ປະຕິບັດໂຄງການ ຫລື ລັດຖະບານ ອາດຈະມີ ຕະຫຼອດໄລຍະອາຍຸຂອງສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ.

**ມາດຕາ 11.4**

ສູນຄູ່ຮ່ວມພາກລັດ-ພາກເອກະຊົນ ຕ້ອງຈັດເອົາໂຄງການຄູ່ຮ່ວມພາກລັດ-ພາກເອກະຊົນ ເຂົ້າໃນວາລະກອງປະຊຸມຄັ້ງຕໍ່ໄປ ຂອງຄະນະກຳມະການລົງທຶນ ແລະ ແຈກຢາຍບົດສຶກສາຄວາມອາດສາມາດເປັນໄປໄດ້ ໃຫ້ແກ່ຄະນະກຳມະການລົງທຶນພ້ອມທັງຂໍ້ສະເໜີແນະ ຢ່າງໜ້ອຍສິບ ວັນລັດຖະການກ່ອນວັນເປີດກອງປະຊຸມ.

**ມາດຕາ 11.5**

ຄະນະກຳມະການລົງທຶນ ຕ້ອງທົບທວນບົດສຶກສາຄວາມອາດສາມາດເປັນໄປໄດ້ ແລະ ຂໍ້ສະເໜີແນະ ຂອງສູນຄູ່ຮ່ວມພາກລັດ-ພາກເອກະຊົນ ແລະ ອອກຂໍ້ຕົກລົງໃດໜຶ່ງດັ່ງນີ້:

1. ການອະນຸມັດ: ບົດສຶກສາຄວາມອາດສາມາດເປັນໄປໄດ້ ໄດ້ຮັບການອະນຸມັດ ແລະ ອົງການຈັດຕັ້ງປະຕິບັດໂຄງການ ໄດ້ຮັບອະນຸຍາດໃຫ້ດຳເນີນວຽກງານການສ້າງເອກະສານປະມູນ;
2. ການປະຕິເສດ: ບົດສຶກສາຄວາມອາດສາມາດເປັນໄປໄດ້ ຖືກປະຕິເສດ ແລະ ໂຄງການບໍ່ສາມາດດຳເນີນການໃຫ້ເປັນໂຄງການຄູ່ຮ່ວມພາກລັດ-ພາກເອກະຊົນໄດ້;
3. ການຕົກລົງຊັກຊ້າ: ບົດສຶກສາຄວາມອາດສາມາດເປັນໄປໄດ້ ບໍ່ໄດ້ຮັບການອະນຸມັດ ແລະ ກໍບໍ່ໄດ້ຖືກປະຕິເສດ ເພາະວ່າຄະນະກຳມະການລົງທຶນ ສະເໜີຂໍຄວາມກະຈ່າງແຈ້ງຕື່ມ ແລະ/ຫຼື ການອະທິບາຍເພີ່ມເຕີມ ໃຫ້ແກ່ບົດສຶກສາຄວາມອາດສາມາດເປັນໄປໄດ້ດັ່ງກ່າວ.

**ມາດຕາ 11.6**

ການຕົກລົງຂອງຄະນະກຳມະການລົງທຶນ ພ້ອມທັງເຫດຜົນຂອງການຕົກລົງ ຕ້ອງລະບຸເປັນລາຍລັກອັກສອນໃນບົດບັນທຶກກອງປະຊຸມຂອງຄະນະກຳມະການລົງທຶນ ເຊິ່ງຈະຖືກພິມພາຍໃນຫ້າວັນລັດຖະການ ນັບແຕ່ມື້ດຳເນີນກອງປະຊຸມ.

**ມາດຕາ 11.7**

ການຮັບຮອງຂອງຄະນະກຳມະການລົງທຶນ ຈະຕ້ອງໄດ້ສົ່ງໃຫ້ສະພາແຫ່ງຊາດ ເພື່ອຮັບຮອງເອົາ ຖ້າຫາກວ່າ ໂຄງການກວມເອົາ ການຄ້ຳປະກັນ, ການໃຫ້ສິດຜູກຂາດ ຫລື ການຍົກເວັ້ນຈາກກົດໝາຍໃດນຶ່ງ**ມາດຕາ 11.8**

ໃນກໍລະນີການຕົກລົງຊັກຊ້າ, ຄະນະກຳມະການລົງທຶນຈະວາງຂອບເຂດເວລາໃຫ້ອົງການຈັດຕັ້ງປະຕິບັດໂຄງການ ເພື່ອໃຫ້ຄວາມກະຈ່າງແຈ້ງ ແລະ/ຫຼື ການອະທິບາຍເພີ່ມເຕີມ ແກ່ບົດສຶກສາ

ຄວາມອາດສາມາດເປັນໄປໄດ້. ຫຼັງຈາກເວລາດັ່ງກ່າວ, ຂັ້ນຕອນທີ່ກຳນົດໄວ້ໃນມາດຕາ 10.1ເຖິງ ມາດຕາ 0.0 ຂອງດຳລັດສະບັບນີ້ຈະຖືກປະຕິບັດຊ້ຳຄືນ.

**ມາດຕາ 11.9**

ການຕົກລົງ ຂອງຄະນະກຳມະການລົງທຶນ ຈະຕ້ອງບໍ່ຊັກຊ້າຫຼາຍກວ່າສອງຄັ້ງ.

**ມາດຕາ 11.10**

ບົດສຶກສາຄວາມອາດສາມາດເປັນໄປໄດ້ ຍັງຈະຖືກນຳໃຊ້ເພື່ອຈຸດປະສົງໃນການສະເໜີຂໍການຊ່ວຍເຫຼືອດ້ານການເງິນ ໂດຍສອດຄ່ອງຕາມກົດລະບຽບ ແລະ ວິທີການປະຕິບັດທີ່ນຳໃຊ້ຂອງກອງທຶນເພື່ອຮັບປະກັນຄວາມສາມາດມີປະສິດຜົນ

**ມາດຕາ 11.11**

ບົດສຶກສາຄວາມອາດສາມາດເປັນໄປໄດ້ ຍັງຈະຖືກນຳໃຊ້ເພື່ອຈຸດປະສົງໃນການສະເໜີຂໍການຊ່ວຍເຫຼືອດ້ານການເງິນ ເພື່ອການປະມູນການບໍລິການໃຫ້ຄຳປຶກສາໃນການດຳເນີນງານ ໂດຍສອດຄ່ອງກັບກົດລະບຽບ ແລະ ວິທີການປະຕິບັດຂອງທຶນສຳລັບການກະກຽມໂຄງການ.

## ໝວດທີ III
## ການປະມູນໂຄງການ ແລະ ການເຮັດສັນຍາ

**ມາດຕາ 12. ຂອບເຂດ**

**ມາດຕາ 12.1**

ໝວດນີ້ ໄດ້ກຳນົດກ່ຽວກັບຂັ້ນຕອນທີ່ຕ້ອງປະຕິບັດ ໂດຍອີງການຈັດຕັ້ງປະຕິບັດໂຄງການ ເພື່ອຈັດການປະມູນ ແລະ ຈັດຫາໂຄງການຄູ່ຮ່ວມພາກລັດ-ພາກເອກະຊົນ. ການປະມູນຂອງທຸກໂຄງການຄູ່ຮ່ວມພາກລັດ-ພາກເອກະຊົນ ທີ່ໄດ້ຮັບອະນຸມັດຈາກຄະນະກຳມະການລົງທຶນຈະຕ້ອງປະຕິບັດຕາມດຳລັດສະບັບນີ້ ລວມທັງເອກະສານຄັດຕິດ. ມີສະເພາະແຕ່ສຳລັບໂຄງການຄູ່ຮ່ວມ

ພາກລັດ-ພາກເອກະຊົນເທົ່ານັ້ນ ທີ່ລະບຽບການນີ້ ໄດ້ປຸ່ງແຕ່ງແທນກົດໝາຍ ແລະ ລະບຽບການອື່ນໆ ທັງໝົດ ກ່ຽວກັບການປະມູນ.

## ມາດຕາ 13. ຫລັກການ

### ມາດຕາ 13.1

ຢູ່ ສປປ ລາວ, ການປະມູນກ່ຽວກັບການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ຕ້ອງອີງໃສ່ຫລັກການດັ່ງຕໍ່ໄປນີ້:

1. ຄວາມເທົ່າທຽມກັນ: ສິດເທົ່າທຽມກັນຂອງຜູ້ເຂົ້າແຂ່ງຂັນປະມູນທັງໝົດ, ການເປັນຮູບປະທຳ ແລະ ຄວາມບໍ່ລຳອຽງ ຂອງການຄັດເລືອກຄູ່ສັນຍາຝ່າຍເອກະຊົນ, ການເປັນຄູ່ຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ເຊິ່ງແຕ່ລະຝ່າຍລ້ວນແຕ່ມີຜົນປະໂຫຍດ, ການແບ່ງສິດອຳນາດ, ຄວາມຮັບຜິດຊອບ ແລະ ຄວາມສ່ຽງ ແບບປະສົມປະສານ;
2. ຄວາມສະເໝີພາບ: ຄວາມຮັບຜິດຊອບຢ່າງສະເໝີພາບກັນ ຕໍ່ໜ້າກົດໝາຍ ຂອງຄູ່ສັນຍາຝ່າຍລັດຖະບານ ແລະ ຄູ່ສັນຍາຝ່າຍເອກະຊົນ;
3. ການບໍ່ລຳອຽງ: ການປະມູນ ແລະ ການຄັດເລືອກເອົາຜູ້ເຂົ້າແຂ່ງຂັນປະມູນທີ່ຊະນະ ມີຄວາມທ່ຽງທຳ ແລະ ປາສະຈາກຄວາມອະຄະຕິ;
4. ຄວາມໂປ່ງໃສ: ພາກສ່ວນເອກະຊົນ ແລະ ສາທາລະນະຊົນ ມີຄວາມສາມາດເຂົ້າຫາຂໍ້ມູນຂ່າວສານຢ່າງສະເໝີພາບກັນ ໃນທຸກຂັ້ນຕອນຂອງການປະມູນ;
5. ການແຂ່ງຂັນທີ່ສະອາດ: ບໍ່ມີການຈຳກັດ ແລະ ການສວຍໃຊ້ ສິດຂອງຄູ່ສັນຍາ ໃນການເຂົ້າຮ່ວມການແຂ່ງຂັນປະມູນ;
6. ຈັນຍາທຳ: ຜູ້ເຂົ້າແຂ່ງຂັນປະມູນ, ຜູ້ຮັບເໝົາ, ອົງການຈັດຕັ້ງຂອງລັດຖະບານ ແລະ ຝ່າຍອື່ນໆທີ່ກ່ຽວຂ້ອງທັງໝົດ ຕ້ອງປະຕິບັດຕາມມາດຕະຖານຈັນຍາທຳໃນລະດັບສູງທີ່ສຸດ ໃນໄລຍະການຈັດຕັ້ງປະຕິບັດຂັ້ນຕອນການປະມູນ ແລະ ການປະຕິບັດສັນຍາ ດ້ວຍທຶນຂອງລັດ;
7. ການຄຸ້ມຄອງດ້ວຍກົດໝາຍ: ການປະຕິບັດຢ່າງເດັດຂາດ ຕາມຂໍ້ກຳນົດຂອງກົດໝາຍ ແລະ ລະບຽບການ ໂດຍອົງການຈັດຕັ້ງຂອງລັດຖະບານ, ພະນັກງານ, ພາກສ່ວນເອກະຊົນ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງອື່ນໆໃນການປະມູນ.

### ມາດຕາ 13..2

ໂດຍອີງໃສ່ດຳລັດສະບັບນີ້ ແລະ ນິຕິກຳຈັດຕັ້ງປະຕິບັດດຳລັດສະບັບນີ້, ຄູ່ສັນຍາຝ່າຍລັດ ແລະ ຝ່າຍເອກະຊົນ ມີອິດສະຫລະໃນການກຳນົດເງື່ອນໄຂສະເພາະ ຂອງສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນໄດ້ ໂດຍປະຕິບັດຕາມກົດໝາຍລາວ. ສັນຍາການເປັນຄູ່ຮ່ວມ ພາກລັດ-ພາກ

ເອກະຊົນ ອາດຈະກວມເອົາ ໜ້າທີ່ ແລະ ການອອກແບບ, ການກໍ່ສ້າງ, ການລົງທຶນ, ການບູລະນະຮັກສາ ແລະ ການດຳເນີນ ໂຄງລ່າງພາຍໃຕ້ສັນຍາສະບັບດຽວ. ອົງການຈັດຕັ້ງປະຕິບັດໂຄງການມີສິດເຮັດສັນຍາ ອອກນອກຂອບເຂດ ຂໍ້ກຳນົດ ຂອງການບໍລິການ ສາທາລະນະ ໂດຍເຮັດສັນຍາການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ

**ມາດຕາ 13.3**

ການປະເມີນຜົນ ແລະ ການຕົກລົງຄັດເລືອກເອົາຂໍ້ສະເໜີ ພາຍໃນຂັ້ນຕອນການປະມູນ ແມ່ນດຳເນີນໄປໂດຍອີງໃສ່ເງື່ອນໄຂທາງດ້ານເສດຖະກິດ, ການເງິນ, ສັງຄົມ ລວມທັງບົດບາດ ຍິງຊາຍ ແລະ ສິ່ງແວດລ້ອມ ທີ່ກຳນົດໂດຍອົງການຈັດຕັ້ງປະຕິບັດໂຄງການ.

## ມາດຕາ 14. ການກະກຽມເອກະສານປະມູນ

**ມາດຕາ 14.1**

ພາຍຫຼັງການອະນຸມັດເອກະສານສຶກສາຄວາມເປັນໄປໄດ້ ໂດຍຄະນະກຳມະການລົງທຶນແລ້ວ, ອົງການຈັດຕັ້ງປະຕິບັດໂຄງການ ຕ້ອງກະກຽມເອກະສານປະມູນ ສຳລັບໂຄງການຄູ່ຮ່ວມພາກລັດ-ພາກເອກະຊົນ ໂດຍສອດຄ່ອງກັບ ເອກະສານຄັດຕິດຂອງດຳລັດສະບັບນີ້ ທີ່ຕ້ອງຖືກຮັບຮອງໂດຍຄະນະກຳມະການລົງທຶນ.

**ມາດຕາ 14.2**

ອົງການຈັດຕັ້ງປະຕິບັດໂຄງການ ຕ້ອງສົ່ງເອກະສານປະມູນໃຫ້ແກ່ສູນການເປັນຄູ່ຮ່ວມລະຫວ່າງພາກລັດ-ພາກເອກະຊົນ ແລະ ສູນດັ່ງກ່າວຈະເປັນຜູ້ທົບທວນຄືນ ແລະ ຖ້າຈຳເປັນສູນດັ່ງກ່າວກໍ່ຈະ ມີຂໍ້ສະເໜີໃຫ້ແກ່ ອົງການຈັດຕັ້ງປະຕິບັດໂຄງການ ພາຍໃນ 30 ວັນ ນັບແຕ່ມື້ສົ່ງເອກະສານປະມູນ ຂະບວນການດັ່ງກ່າວ ຈະຕ້ອງເຮັດຊ້ຳຄືນອີກຈົນກວ່າ ເອກະສານປະມູນ ຈະຖືກຍອມຮັບໂດຍສູນການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ເພື່ອສົ່ງຕໍ່ໃຫ້ຄະນະກຳມະການລົງທຶນ ຫລື ຈົນກວ່າສູນການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ປະຕິເສດ ການສົ່ງຕໍ່ໃຫ້ຄະນະກຳມະການລົງທຶນ. ຖ້າວ່າສູນ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນປະຕິເສດການຍື່ນ ສູນດັ່ງກ່າວຈະຕ້ອງ ກຳນົດວ່າຈະລົບລ້າງໂຄງການ ການເປັນຄູ່ຮ່ວມ ລະຫວ່າງພາກລັດ-ພາກເອກະຊົນ ຫລື ລິເລີ້ມບົດວິພາກໃໝ່ ສຳລັບໂຄງການ

**ມາດຕາ 14.3**

ສູນການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ຈະຕ້ອງບັນທຶກໂຄງການການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນເຂົ້າໃນວາລະ ຂອງກອງປະຊຸມ ຄະນະກຳມະການລົງທຶນ

ພ້ອມກັບບົດວິພາກ ທີ່ກໍານົດໄວ້ໃນ ມາດຕາ 11 ຂອງດໍາລັດສະບັບນີ້ ແລະ ສົ່ງເອກະສານປະມູນ ໃຫ້ແກ່ຄະນະກໍາມະການລົງທຶນ ພ້ອມດ້ວຍຂໍ້ສະເໜີແນະ ຢ່າງນ້ອຍ 10 ວັນກ່ອນມື້ປະຊຸມ

### ມາດຕາ 14.4

1. ຄະນະກໍາມະການລົງທຶນ ຈະຕ້ອງທົບທວນຄືນ ເອກະສານປະມູນ ແລະ ຂໍ້ສະເໜີແນະ ຂອງສູນການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ແລະອອກຂໍ້ຕົກລົງໃດນຶ່ງ ດັ່ງນີ້:ການອະນຸມັດ: ເອກະສານປະມູນ ໄດ້ຖືກຮັບຮອງ ແລະ ອົງການຈັດຕັ້ງປະຕິບັດ ໂຄງການ ຖືກອະນຸມັດໃຫ້ດໍາເນີນການປະມູນ
2. ການຕົກລົງຊັກຊ້າ: ເອກະສານປະມູນ ບໍ່ໄດ້ຮັບການອະນຸມັດ ເນື່ອງຈາກຄະນະ ກໍາມະການລົງທຶນ ຕ້ອງການໃຫ້ມີການ ອະທິບາຍຊີ້ແຈງ ແລະ ເພີ້ມເຕີມ ບາງບັນຫາ ຂອງເອກະສານປະມູນ.

### ມາດຕາ 14.5

ຂໍ້ຕົກລົງຂອງຄະນະກໍາມະການລົງທຶນ ແລະ ຄໍາອະທິບາຍ ຈະຕ້ອງເຮັດເປັນລາຍລັກອັກສອນ ໃນ ບົດບັນທຶກການປະຊຸມ ຂອງຄະນະກໍາມະການລົງທຶນ ທີ່ຈະຕ້ອງພິມເຜີຍແຜ່ ພາຍໃນ 5 ວັນ ລັດຖະການ ຫລັງຈາກມື້ປະຊຸມ

### ມາດຕາ 14.6

ໃນກໍລະນີການຕົກລົງຊັກຊ້າ ອົງການຈັດຕັ້ງປະຕິບັດໂຄງການ ມີເວລາບໍ່ເກີນ 15 ວັນລັດຖະການ ເພື່ອຊີ້ແຈງ ແລະ/ຫລື ເພີ້ມເຕີມ ໃສ່ເອກະສານປະມູນ ແລະ ຂັ້ນຕອນ ທີ່ກໍານົດໄວ້ໃນມາດຕາ 14.2 ເຖິງ 14.5 ຂອງດໍາລັດສະບັບນີ້ຈະຖືກເຮັດຊໍ້າຄືນອີກ

### ມາດຕາ 14.7

ໃນກໍລະນີ ເອກະສານປະມູນ ຖືກດັດແກ້ ຢ່າງຫລວງຫລາຍ ອົງການຈັດຕັ້ງປະຕິບັດໂຄງການ ຕ້ອງຂໍອະນຸມັດໃໝ່ຈາກ ຄະນະກໍາມະການລົງທຶນແລະ ຂັ້ນຕອນ ທີ່ກໍານົດໄວ້ໃນມາດຕາ 14.2 ເຖິງ 14.5 ຂອງດໍາລັດສະບັບນີ້ຈະຖືກເຮັດຊໍ້າຄືນອີກ

### ມາດຕາ 14.8

ອົງການຈັດຕັ້ງປະຕິບັດໂຄງການ ຈະຕ້ອງສ້າງຕັ້ງຄະນະກຳມະການປະເມີນຜົນ ຊຶ່ງປະກອບດ້ວຍ ຜູ້ຕາງໜ້າຈາກສູນການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ຢ່າງນ້ອຍນຶ່ງຄົນ

**ມາດຕາ 15 ສັນຍາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ**

**ມາດຕາ 15.1**

ສຳລັບໂຄງການ ການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ຈະຕ້ອງມີການເຊັນສັນຍາ ການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ລະຫວ່າງ ລັດຖະບານ ແລະຝ່າຍເອກະຊົນ ທີ່ຖືກຄັດເລືອກ.

**ມາດຕາ 15.2**

ຝ່າຍລັດ ແລະ ຝ່າຍເອກະຊົນ ມີສິດເຈລະຈາ ແລະ ເຊັນສັນຍາ ຕາມຂອບເຂດ ສິດທິ ກ່ຽວກັບທີ່ດິນ ຂອງສັນຍາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ໂດຍຄຳນຶງເຖິງກົດໝາຍທີ່ດິນ.

**ມາດຕາ 15.3**

ສັນຍາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ຈະຕ້ອງລະບຸ ທຸກໆບັນຫາ ທີ່ບັນດາຝ່າຍ ເຫັນວ່າຈຳເປັນ ແຕ່ຕ້ອງປະຕິບັດຕາມເນື້ອໃນ ແລະ ເງື່ອນໄຂ ທີລະບຸໄວ້ໃນ ດຳລັດສະບັບນີ້ ແລະ ລາຍລະອຽດ ຂອງຂໍ້ກຳນົດ ທີ່ໄດ້ລະບຸໄວ້ໃນເອກະສານຄັດຕິດ ຂອງດຳລັດສະບັບນີ້

**ມາດຕາ 15.4**

ສັນຍາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ແຕ່ລະອັນ ຈະຕ້ອງຖືກຄຸ້ມຄອງ ພາຍໃຕ້ກົດໝາຍ ຂອງ ສປປ ລາວ ນອກຈາກກໍລະນີ ສັນຍາໄດ້ກຳນົດໄວ້ຢ່າງອື່ນ.

**ມາດຕາ 15.5**

ສັນຍາການເປັນ ຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ອາດລວມມີການຈ່າຍໂດຍກົງ ແລະ/ຫລື ສະໜອງການຮັບປະກັນ ຈາກລັດຖະບານ ໃຫ້ແກ່ຝ່າຍເອກະຊົນ ສໍາລັບການນໍາໃຊ້ໂຄງລ່າງ ແລະ/ຫລື ການບໍລິການຕ່າງໆ ທີ່ໄດ້ມີການພັດທະນາ ແລະທີໄດ້ສະໜອງໃຫ້ໂດຍຝ່າຍເອກະຊົນ.

**ມາດຕາ 15.6**

ສັນຍາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ສາມາດອະນຸຍາດໃຫ້ຝ່າຍ ເອກະຊົນ ເກັບຄ່າທໍານຽມ ແລະ ຄ່າອື່ນໆ ຈາກການສະໜອງໂຄງລ່າງ ແລະ/ຫລື ສິ່ງອໍານວຍຄວາມສະດວກ ແລະ/ຫລື ການສະໜອງການບໍລິການ ໂດຍສອດຄ່ອງກັບ ເງື່ອນໄຂ ຂອງສັນຍາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ. ສັນຍາດັ່ງກ່າວ ຈະຕ້ອງລະບຸວິທີການ ແລະ ສູດຄິດໄລ່ໃນການເກັບຄ່າທໍານຽມ ແລະ ຄ່າຕ່າງໆ ໂດຍສອດຄ່ອງກັບເງື່ອນໄຂ ທີ່ກໍານົດໂດຍ ອົງການຈັດຕັ້ງປະຕິບັດໂຄງການ

**ມາດຕາ 15.7**

ໂດຍອີງໃສ່ ຂໍ້ຈໍາກັດທີ່ລະບຸໄວ້ໃນສັນຍາ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ແລະ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການຄໍ້າປະກັນ ເລກທີ່ 06/ສພຊ ລົງວັນທີ 20 ພຶດສະພາ 2005 ແລະ ລະບຽບການຈັດຕັ້ງປະຕິບັດ ຂອງກົດໝາຍດັ່ງກ່າວ ຝ່າຍເອກະຊົນ ມີສິດນໍາເອົາຊັບສິນຂອງຕົນ, ສິດ ຫລື ຜົນປະໂຫຍດ ລວມທັງສິ່ງເຫລົ່ານັ້ນ ພາຍໃຕ້ໂຄງການ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ໄປເປັນສິ່ງຄໍ້າປະກັນ ເພື່ອກູ້ຢືມເງິນ ສໍາລັບໂຄງການ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ລວມທັງສິ່ງດັ່ງຕໍ່ໄປນີ້:

1. ການຄໍ້າປະກັນ ດ້ວຍສັງຫາລິມາຊັບ ຫລື ອະສັງຫາລິມະຊັບ ທີ່ເປັນຂອງຝ່າຍເອກະຊົນ ຫລື ຜົນປະໂຫຍດ ຢູ່ໃນຊັບສິນຂອງໂຄງການ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ.
2. ການຈໍານໍາລາຍຮັບ ທີ່ຈະເກີດຂຶ້ນໃນອານາຄົດ ແລະ ລາຍຮັບຂອງຝ່າຍເອກະຊົນ ຈາກການນໍາໃຊ້ໂຄງການ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ

**ມາດຕາ 15.8**

ຜູ້ຖືຮຸ້ນ ຂອງວິສາຫະກິດ ໂຄງການ ທີ່ຖືກສ້າງຕັ້ງຂຶ້ນໂດຍຝ່າຍເອກະຊົນ ມີສິດ ນໍາເອົາຮຸ້ນຂອງຕົນ ຢູ່ໃນວິສາຫະກິດໂຄງການ ໄປຄໍ້າປະກັນ.

**ມາດຕາ 15.9**

ຝ່າຍຕ່າງໆຢູ່ໃນສັນຍາ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ສາມາດຮັບປະກັນ ສິດ ແລະຜົນປະໂຫຍດ ກ່ຽວກັບການຄໍ້າປະກັນ ໂດຍການເຊັນ ສັນຍາຄໍ້າປະກັນອື່ນໆ ເຊັ່ນ: ຈໍານໍາຮຸ້ນ, ຈໍານໍາບັນຊີ, ຈໍານໍາສັງຫາລິມະຊັບ ຫລື ສັນຍາຈໍານໍາລາຍຮັບ.

**ມາດຕາ 15.10**

ແຕ່ລະຝ່າຍຂອງສັນຍາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ຈະຕ້ອງປະຕິບັດ ພັນທະ ທີ່ຕົນມີ ກ່ຽວກັບການລົງທຶນ

**ມາດຕາ 15.11**

ລັດຖະບານແຫ່ງ ສປປ ລາວ ຮັບປະກັນວ່າຈະບໍ່ ອະຍັດຊັບສິນ ຫລື ຜົນປະໂຫຍດ ທີ່ກ່ຽວຂ້ອງ ກັບ ສັນຍາ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນໂດຍບໍ່ຈ່າຍ ຄ່າຊົດເຊີຍ ທີ່ສົມ ເຫດສົມຜົນ ໃຫ້ແກ່ຝ່າຍເອກະຊົນ

**ມາດຕາ 15.12**

ລັດຖະບານ ຮັບປະກັນ ຈະຈ່າຍ ຄ່າຊົດເຊີຍ ຕໍ່ໜີ້ສິນ, ການເສຍຜົນກໍາໄລ ແລະ ມູນຄ່າການ ລະເມີດ ໃຫ້ແກ່ຝ່າຍ ເອກະຊົນໃນກໍລະນີ ສັນຍາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະ ຊົນ ຖືກຍົກເລີກກ່ອນກໍານົດ ເນື່ອງຈາກການລະເມີດຂອງລັດຖະບານ ຄ່າຊົດເຊີຍລະອຽດຕ່າງໆ ທີ່ ຈະຕ້ອງຈ່າຍ ໃຫ້ແກ່ຝ່າຍເອກະຊົນ ຕ້ອງໄດ້ຖືກລະບຸໄວ້ໃນສັນຍາ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ທີ່ໄດ້ເຊັນກັນ ລະຫວ່າງ ຝ່າຍລັດ ແລະ ຝ່າຍເອກະຊົນ

**ມາດຕາ 15.13**

ຝ່າຍເອກະຊົນ ມີສິດຕົກລົງ,ໂດຍມີການອະນຸມັດ ຈາກລັດຖະບານ, ໃຫ້ຜູ້ໃຫ້ກູ້ ເຂົ້າມາແທນໃນ ໂຄງການ ໃນກໍລະນີວິສາຫະກິດ ໂຄງການ ຫລື ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະ ຊົນ ລະເມີດ ພາຍໃຕ້ສັນຍາ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ຫລື ສັນຍາເງິນ ກູ້ ທີ່ກ່ຽວຂ້ອງ . ລັດຖະບານ ສາມາດເຊັນສັນຍາ ໂດຍກົງກັບຜູ້ໃຫ້ກູ້ ກ່ຽວກັບການເຂົ້າມາແທນໃນ ໂຄງການ

**ມາດຕາ 15.14**

ໃນກໍລະນີຜູ້ໃຫ້ກູ້ ປະຕິບັດສິດເຂົ້າມາແທນ ຜູ້ໃຫ້ກູ້ອາດມີການ ຕົກລົງໃໝ່ ກ່ຽວກັບກຳມະສິດ ແລະ ການບໍລິຫານ ຂອງວິສາຫະກິດໂຄງການ ຊຶ່ງການຕົກລົງດັ່ງກ່າວ ສອດຄ່ອງກັບ ຂໍ້ກຳນົດທີ່ ກ່ຽວຂ້ອງ ຂອງດຳລັດສະບັບນີ້ ແລະ ສັນຍາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ບໍ່ໄດ້ຖືກປ່ຽນແປງຢ່າງຫລວງຫລາຍ. ທີ່ດິນ ແລະ ຊັບສິນທີ່ໄດ້ ຈັດແບ່ງໄວ້ພາຍໃຕ້ ສັນຍາການ ເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ຈະສືບຕໍ່ ຖືກຈັດແບງ ໃນກໍລະນີ ມີການເຂົ້າມາ ແທນ ຂອງຜູ້ໃຫ້ກູ້

**ມາດຕາ 15.15**

ລັດຖະບານ ຈະຮັບປະກັນ ຫລື ກໍ່ໃຫ້ມີການຮັບປະກັນ ໃຫ້ວິສາຫະກິດ ໂຄງການ ເຂົ້າຫາແຫລ່ງ ເງິນຕາ, ສາມາດ ແລກປ່ຽນສະກຸນເງິນ ທ້ອງຖິ່ນ ເປັນສະກຸນເງິນຕ່າງປະເທດ ເພື່ອຈຸດປະສົງການ ໂອນເງິນ ກັບຄືນປະເທດ ແລະ ການຊຳລະໜີ້ ແລະ ສາມາດໂອນສະກຸນເງິນ ຕ່າງປະເທດອອກ ນອກປະເທດ ໂດຍສອດຄ່ອງກັບ ລະບຽບກົດໝາຍ ຂອງທະນາຄານ ແຫ່ງ ສປປ ລາວ

**ມາດຕາ 16 ຂະບວນການຄັດເລືອກເບື້ອງຕົ້ນ**

**ມາດຕາ 16.1**

ອົງການຈັດຕັ້ງປະຕິບັດໂຄງການ ຕ້ອງຈັດຕັ້ງຂະບວນການຄັດເລືອກເບື້ອງຕົ້ນ ໂດຍສອດຄ່ອງກັບ ຂັ້ນຕອນທີ່ລະບຸໄວ້ໃນເອກະສານຄັດຕິດ ຂອງດຳລັດສະບັບນີ້

**ມາດຕາ 17 ຂະບວນການຄັດເລືອກ**

**ມາດຕາ 17.1**

ອົງການຈັດຕັ້ງປະຕິບັດໂຄງການ ຕ້ອງຈັດຕັ້ງຂະບວນການຄັດເລືອກ ໂດຍສອດຄ່ອງກັບ ຂັ້ນຕອນ ທີ່ລະບຸໄວ້ໃນເອກະສານຄັດຕິດ ຂອງດຳລັດສະບັບນີ້.

**ມາດຕາ 18 ຂະບວນການຮັບຮອງຂັ້ນສຸດທ້າຍ**

**ມາດຕາ 18.1**

ຫລັງຈາກທີ່ໄດ້ມີການຄັດເລືອກ ຜູ້ຊະນະການປະມູນ ອົງການຈັດຕັ້ງປະຕິບັດໂຄງການ ຕ້ອງນຳສົ່ງສັນຍາ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ເພື່ອໃຫ້ສູນການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ເຊັ່ນ ສູນດັ່ງກ່າວຈະເປັນຜູ້ ທົບທວນຄືນ ແລະ ຖ້າຈຳເປັນ ກໍ່ສົ່ງຂໍ້ສະເໜີ ໃຫ້ແກ່ອົງການຈັດຕັ້ງປະຕິບັດໂຄງການ ພາຍໃນ 5 ວັນທຳງານ ນັບແຕ່ມື້ນຳສົ່ງເປັນຕົ້ນໄປ

**ມາດຕາ 18.2**

ສູນການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ຈະຕ້ອງກະກຽມຂໍ້ສະເໜີ ໃຫ້ແກ່ຄະນະກຳມະການລົງທຶນ.

**ມາດຕາ 18.3**

ອົງການການຈັດຕັ້ງປະຕິບັດໂຄງການ ຕ້ອງຍື່ນຕໍ່ກະຊວງການເງິນ ເອກະສານການສະໜອງທຶນສຳລັບຫຼາຍປີ ສະບັບສຸດທ້າຍ ທີ່ສະແດງກ່ຽວກັບ: (i) ຕາຕະລາງການຊຳລະເງິນໂດຍກົງ,ການຮັບປະກັນ ຫລືພັນທະອື່ນໆຂອງອົງການຈັດຕັ້ງປະຕິບັດໂຄງການ ຫລື ລັດຖະບານຕະຫຼອດໄລຍະຂອງສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ, ແລະ (ii) ຄວາມມຸ້ງໝັ້ນຂອງອົງການຈັດຕັ້ງປະຕິບັດໂຄງການ ໃນການບັນຈຸເອົາການຊຳລະດັ່ງກ່າວ,ການຮັບປະກັນ ຫລືພັນທະອື່ນໆ ຕາມລຳດັບບຸລິມະສິດ, ເຂົ້າໃນບົດສະເໜີແຜນງົບປະມານປະຈຳປີຂອງອົງການ ທີ່ຍື່ນຕໍ່ລັດຖະບານຕາມຂັ້ນຕອນຂອງງົບປະມານທີ່ກຳນົດໄວ້. ເອກະສານການສະໜອງທຶນ ສຳລັບຫຼາຍປີ ຕ້ອງຍື່ນສະເໜີຕາມແບບຟອມທີ່ສອດຄ່ອງກັບລະບຽບການທີ່ກຳນົດໂດຍກະຊວງການເງິນ.

**ມາດຕາ 18.4**

ຈາກນັ້ນ, ສູນຄູ່ຮ່ວມພາກລັດ-ພາກເອກະຊົນ ຕ້ອງຈັດເອົາໂຄງການຄູ່ຮ່ວມພາກລັດ-ພາກເອກະຊົນເຂົ້າໃນວາລະກອງປະຊຸມຂອງຄະນະກຳມະການລົງທຶນ ແລະ ແຈກຢາຍສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ສະບັບສຸດທ້າຍ ໃຫ້ແກ່ຄະນະກຳມະການລົງທຶນພ້ອມທັງຂໍ້ສະເໜີແນະຢ່າງຊ້າ ຫ້າວັນລັດຖະການ ກ່ອນມື້ປະຊຸມ.

**ມາດຕາ 18.5**

ຄະນະກຳມະການລົງທຶນ ຕ້ອງທົບທວນສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ສະບັບສຸດທ້າຍ ແລະ ຂໍ້ສະເໜີແນະ ຂອງສູນຄູ່ຮ່ວມພາກລັດ-ພາກເອກະຊົນ ແລະ ອອກຂໍ້ຕົກລົງໃດໜຶ່ງດັ່ງຕໍ່ໄປນີ້:

1. ການອະນຸມັດ: ສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ສະບັບສຸດທ້າຍ ໄດ້ຖືກອະນຸມັດ ແລະ ອົງການຈັດຕັ້ງປະຕິບັດໂຄງການ ໄດ້ຮັບອະນຸຍາດໃຫ້ດຳເນີນການອອກແຈ້ງການກ່ຽວກັບການຕົກລົງເຊັນສັນຍາ, ເພື່ອໃຫ້ກະຊວງແຜນການ ແລະ ການລົງທຶນສາມາດເຊັນສັນຍາການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ພາກເອກະຊົນ ໃນນາມລັດຖະບານ, ຫຼື
2. ການປະຕິເສດ: ສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ສະບັບສຸດທ້າຍ ບໍ່ໄດ້ຮັບການອະນຸມັດ ເນື່ອງຈາກວ່າ ຄະນະກຳມະການລົງທຶນ ບໍ່ເຫັນດີກ່ຽວກັບການປ່ຽນແປງທັງໝົດທີ່ໄດ້ສະເໜີ.

**ມາດຕາ 18.6**

ການຕົກລົງຂອງຄະນະກຳມະການລົງທຶນ ແລະ ເຫດຜົນຂອງການຕົກລົງດັ່ງກ່າວ ຕ້ອງລະບຸເປັນລາຍລັກອັກສອນຢູ່ໃນບົດບັນທຶກກອງປະຊຸມ ຂອງ ຄະນະກຳມະການລົງທຶນ ເຊິ່ງຈະຖືກຈັດພິມພາຍໃນ 5 ວັນລັດຖະການ ຫຼັງຈາກມື້ປະຊຸມ.

**ມາດຕາ 18.7**

ຖ້າວ່າໂຄງການກວມເອົາ ການຮັບປະກັນ, ການໃຫ້ສິດຜູກຂາດ ຫລື ການຍົກເວັ້ນກົດໝາຍອັນໃໝ່ ຫລື ທີ່ແຕກຕ່າງຈາກສິ່ງທີ່ໄດ້ຖືກຮັບຮອງ ໂດຍຄະນະກຳມະການລົງທຶນ ແລະ ຮັບຮອງໂດຍ ສະພາແຫ່ງຊາດ ໃນໄລຍະການຮັບຮອງ ຂອງບົດວິພາກ, ຄະນະກຳມະການລົງທຶນ ຕ້ອງສົ່ງການຮັບຮອງຂອງຕົນ ໄປຍັງສະພາແຫ່ງຊາດ ເພື່ອຮັບຮອງອີກເທື່ອນື່ງ

ໃນກໍລະນີການປະຕິເສດ, ຂັ້ນຕອນທີ່ລະບຸໃນ ມາດຕາ ນີ້ ຈະຕ້ອງປະຕິບັດຊ້ຳຄືນ.

**ມາດຕາ 18.8**

ໃນກໍລະນີສັນຍາ ທີ່ຈະເຊັນກັນ ຫາກມີການດັດແກ້, ອົງການຈັດຕັ້ງປະຕິບັດໂຄງການ ຈະຕ້ອງຂໍອະນຸມັດໃໝ່ ຈາກຄະນະກໍາມະການລົງທຶນ

**ມາດຕາ 19 ການຕົກລົງເຊັນສັນຍາ ແລະ ຂະບວນການເຊັນສັນຍາ**

**ມາດຕາ 19.1**

ຫຼັງຈາກການອະນຸມັດຮັບຮອງສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ສະບັບສຸດທ້າຍ ໂດຍຄະນະກໍາມະການຄຸ້ມຄອງການລົງທຶນ, ອົງການຈັດຕັ້ງປະຕິບັດໂຄງການ ຕ້ອງອອກແຈ້ງການການຕົກລົງເຊັນສັນຍາ ທີ່ຕ້ອງລະບຸ ຢ່າງໜ້ອຍ ຊື່ຂອງຄູ່ສັນຍາຝ່າຍເອກະຊົນທີ່ຖືກຄັດເລືອກ ແລະການອະທິບາຍໂດຍຫຍໍ້ ກ່ຽວກັບເນື້ອໃນ ແລະ ເງື່ອນໄຂທີ່ສໍາຄັນ ຂອງສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ.

**ມາດຕາ 19.2**

ຈາກນັ້ນ, ກະຊວງແຜນການ ແລະ ການລົງທຶນ ໃນນາມລັດຖະບານ ຕ້ອງດໍາເນີນການເຊັນສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ໂດຍໄວທີ່ສຸດ.

**ມາດຕາ 20 ການເຈລະຈາໂດຍກົງ**

**ມາດຕາ 20.1**

ບົນພື້ນຖານການຮັບຮອງ ໂດຍຄະນະກໍາມະການລົງທຶນ ອີກໃສ່ຂໍ້ສະເໜີແນະ ຂອງສູນການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ອົງການຈັດຕັ້ງປະຕິບັດໂຄງການ ມີສິດດໍາເນີນ ການເຈລະຈາໂດຍກົງ ກ່ຽວກັບສັນຍາ ການເປັນຄູ່ຮ່ວມ ພາກລັດ- ພາກເອກະຊົນ ໂດຍບໍ່ຜ່ານຂັ້ນຕອນການປະມູນ ທີ່ລະບຸໄວ້ຢູ່ໃນດໍາລັດສະບັບນີ້ ໃນກໍລະນີ ດັ່ງຕໍ່ໄປນີ້:

1. ໃນເວລາຈໍາເປັນຮີບດ່ວນ ເພື່ອຮັບປະກັນ ໃຫ້ມີການສືບຕໍ່ ການສະໜອງການບໍລິການ ແລະສາເຫດທີ່ພາໃຫ້ເກີດຄວາມຮີບດ່ວນນີ້ອົງການຈັດຕັ້ງປະຕິບັດໂຄງການ ບໍ່ສາມາດຄາດ ຄະເນລ່ວງໜ້າໄດ້ ແລະ ກໍ່ບໍ່ແມ່ນຜົນມາຈາກການຊັກຊ້າ ຂອງອົງການຈັດຕັ້ງປະຕິບັດໂຄງການ;
2. ໂຄງການການເປັນ ຄູ່ຮ່ວມ ພາກລັດ-ພາກເອກະຊົນ ແມ່ນກ່ຽວຂ້ອງກັບ ບັນຫາປ້ອງກັນຊາດ ປ້ອງກັນຄວາມສະຫງົບ;

3. ມີແຕ່ແຫລ່ງດຽວທີ່ ສາມາດສະໜອງ ການບໍລິການ ທີ່ຕ້ອງການລວມທັງ ການບໍລິການ ກ່ຽວກັບ ຊັບສິນທາງປັນຍາ, ຄວາມລັບທາງການຄ້າ ຫລື ສິດຜູກຂາດອື່ນໆ ທີ່ບຸກຄົນໃດນຶ່ງ ຫລື ຫລາຍ ຄົນ ເປັນເຈົ້າຂອງ ຫລື ຄອບຄອງ; ຫລື
4. ໃນກໍລະນີອື່ນໆຊຶ່ງ ຄະນະກໍາມະການລົງທຶນຮັບຮອງ ການຍົກເວັ້ນດັ່ງກ່າວ ຍ້ອນເຫດຜົນ ກ່ຽວ ກັບສິດຜົນປະໂຫຍດ ລວມຂອງຊາດ ຫລື ໃນກໍລະນີການຮັບຮູ້ ເພື່ອຜົນປະໂຫຍດ ຂອງອົງການ ລັດຖະບານທ້ອງຖິ່ນ .

**ມາດຕາ 20.2**

ການເຈລະຈາໂດຍກົງ ກ່ຽວກັບສັນຍາຄູ່ຮ່ວມ ພາກລັດ-ພາກເອກະຊົນ ຈະສາມາດດໍາເນີນໄດ້ ກັບຝ່າຍທີ່ ອົງການຈັດຕັ້ງປະຕິບັດໂຄງການ ເຫັນວ່າມີຄວາມສາມາດ ຈັດຕັ້ງປະຕິບັດໂຄງການ ການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ.

**ມາດຕາ20.3**

ການເຈລະຈາໂດຍກົງ ກ່ຽວກັບສັນຍາການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ຈະສາມາດ ດໍາເນີນໄດ້ ກໍຕໍ່ເມື່ອ ມີການເຂົ້າຮ່ວມຂອງ ຜູ້ຕາງໜ້າຈາກສູນ ການເປັນຄູ່ຮ່ວມ ພາກລັດ-ພາກ ເອກະຊົນ.

**ມາດຕາ 20.4**

ອົງການຈັດຕັ້ງປະຕິບັດໂຄງການ ທີ່ດໍາເນີນການເຈລະຈາ ໂດຍກົງ ກ່ຽວກັບສັນຍາ ການເປັນຄູ່ ຮ່ວມ ພາກລັດ-ພາກເອກະຊົນ ຈະຕ້ອງພິມເຜີຍແຜ່ ການຕົກລົງ ໃນການດໍາເນີນການເຈລະຈາ ໂດຍກົງກ່ຽວກັບ ສັນຍາການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ຢ່າງໜ້ອຍ 10 ວັນລ່ວງໜ້າ ໂດຍຜ່ານວາລະສານທາງການ ແລະ ເວບໄຊ ຂອງອົງການຈັດຕັ້ງປະຕິບັດໂຄງການ ແລະ ສູນ ການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ແລະ ຕ້ອງ ປະຕິບັດຕາມເງື່ອນໄຂ ທີ່ສູນການເປັນຄູ່ ຮ່ວມ ພາກລັດ-ພາກເອກະຊົນ ແລະ ຄະນະກໍາມະການລົງທຶນ ວາງອອກ.

**ມາດຕາ 20.5**

ນອກຈາກການປະມູນ, ດຳລັດສະບັບນີ້ ແມ່ນນຳໃຊ້ຕໍ່ກັບສັນຍາ ການເຈລະຈາໂດຍກົງ ນອກຈາກກໍລະນີ ຄະນະກຳມະການລົງທຶນ ມີເຫດຜົນ ທີ່ຈະບໍ່ປະຕິບັດຕາມນີ້ ຊຶ່ງຈະຕ້ອງໄດ້ມີການລະບຸ ພ້ອມດ້ວຍການຮັບຮອງໃນ ມາດຕາ 20.1 ຂອງດຳລັດສະບັບນີ້.

## ມາດຕາ 21 ຂໍ້ສະເໜີ ທີ່ບໍ່ໄດ້ຖືກຮຽກເຊີນ

### ມາດຕາ 21.1

ອົງການຈັດຕັ້ງປະຕິບັດໂຄງການ ສາມາດຮັບເອົາ, ທົບທວນຄືນ ແລະ ປະເມີນຂໍ້ສະເໜີ ທີ່ບໍ່ໄດ້ຖືກຮຽກເຊີນ ຫລື ຂໍ້ສະເໜີທີ່ໄດ້ຍື່ນຕາມການ ລິເລີ່ມຂອງ ພາກເອກະຊົນ ກ່ຽວກັບໂຄງການ ການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ຖ້າວ່າຂໍ້ສະເໜີ:

1. ຖືກສ້າງຂື້ນ ແລະ ຍື່ນຢ່າງເປັນເອກະລາດ ໂດຍຝ່າຍເອກະຊົນ
2. ເປັນຜົນປະໂຫຍດຕໍ່ສາທາລະນະຊົນ;
3. ຖືກກະກຽມໂດຍບໍ່ມີສ່ວນຮ່ວມ ຈາກອົງການຈັດຕັ້ງປະຕິບັດໂຄງການ ຫລື ສູນການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ; ແລະ
4. ມີລາຍລະອຽດ ແລະ ຂໍ້ມູນທີ່ພຽງພໍ ເພື່ອໃຫ້ອົງການຈັດຕັ້ງປະຕິບັດໂຄງການ ສາມາດສ້າງບົດວິພາກ.

### ມາດຕາ 21.2

ຫລັງຈາກນັ້ນອົງການຈັດຕັ້ງປະຕິບັດໂຄງການ ສາມາດສ້າງບົດວິພາກ ຫລື ທົບທວນຄືນ ແລະ ດັດປັບ ບົດວິພາກ ທີ່ ກະກຽມ ໂດຍຝ່າຍເອກະຊົນໂດຍສອດຄ່ອງກັບ ມາດຕາ 11 ຂອງດຳລັດສະບັບນີ້

### ມາດຕາ 21.3

ຖ້າຫາກບົດວິພາກ ຖືກຮັບຮອງຈາກ ຄະນະກຳມະການລົງທຶນ, ນອກຈາກກໍລະນີ ໂຄງການ ການເປັນຄູ່ຮ່ວມ ພາກລັດ-ພາກເອກະຊົນ ຕອບສະໜອງຕາມ ເງື່ອນໄຂຂອງການເຈລະຈາໂດຍກົງ

ທີ່ລະບຸໄວ້ໃນມາດຕາ 12 ຂອງເອກະສານຄັດຕິດ, ຂະບວນການປະມູນ ທີ່ລະບຸໄວ້ໃນດຳລັດ ຈະຕ້ອງຖືກປະຕິບັດ.

**ມາດຕາ 21.4**

ອົງການຈັດຕັ້ງປະຕິບັດໂຄງການ ສາມາດໃຊ້ແທນຄືນ ໃຫ້ແກ່ຜູ້ລິເລີ້ມ ຂໍ້ສະເໜີທີ່ບໍ່ໄດ້ຖືກຮຽກເຊີນ ຫລື ໃຫ້ສິດແກ່ຜູ້ລິເລີ້ມ ນຳສະເໜີຄືກັນກັບ ຂໍ້ສະເໜີປະມູນ ທີ່ໄດ້ຊະນະ ຈາກຂະບວນການປະມູນ ພາຍຫລັງ ການຍື່ນ ຂໍ້ສະເໜີ ທີ່ບໍ່ໄດ້ຖືກຮຽກເຊີນ.

**ມາດຕາ 22ການປ່ຽນແປງ ຫລືດັດແກ້ ສັນຍາການເປັນ ຄູ່ຮ່ວມພາກລັດ-ພາກເອກະຊົນທີ່ໄດ້ຮັບການຕົກລົງໃຫ້ເຊັນ.**

**ມາດຕາ 22.1**

ໃນກໍລະນີ ຕ້ອງການໃຫ້ມີການປ່ຽນແປງ ຫລື ດັດແກ້ ສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ, ການປ່ຽນແປງດັ່ງກ່າວ ຈະຕ້ອງສອດຄ່ອງກັບ ຂໍ້ກຳນົດທີ່ກ່ຽວຂ້ອງ ຂອງດຳລັດ ແລະ ຂໍກຳນົດທີ່ກ່ຽວຂ້ອງ ຂອງສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ .

**ມາດຕາ 22.2**

ອົງການຈັດຕັ້ງປະຕິບັດໂຄງການ ຕ້ອງແຈ້ງໃຫ້ສູນການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ກ່ຽວກັບ ການປ່ຽນແປງ ຫລື ດັດແກ້ອັນສຳຄັນ ຕໍ່ສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ກ່ອນທີ່ຈະດຳເນີນການປ່ຽນແປງ ຫລື ດັດແກ້ ພ້ອມທັງອະທິບາຍເຫດຜົນ ກ່ຽວກັບຄວາມຈຳເປັນ ທີ່ຈະຕ້ອງປ່ຽນແປງ ຫລືດັດແກ້. ສູນການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ຈະຕ້ອງທົບທວນຄືນ ຂໍ້ສະເໜີຂໍປ່ຽນແປງ ຫລື ດັດແກ້ ແລະ ອາດຈະຮັບຮອງເອົາ ຫລື ຮ້ອງຂໍໃຫ້ອົງການຈັດຕັ້ງປະຕິບັດໂຄງການ ສະໜອງຂໍ້ມູນເພີ້ມເຕີມ ຫລື ດັດແກ້ ຂໍ້ສະເໜີປ່ຽນແປງ ຫລືດັດແກ້,

**ມາດຕາ 223**

ຖ້າວ່າສູນການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ເຫັນວ່າຂໍ້ສະເໜີປ່ຽນແປງ ຫລືດັດແກ້ ສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ເປັນບັນຫາທີສຳຄັນພື້ນຖານ ຊຶ່ງກະທົບຕໍ່ມູນຄ່າ ຂອງເງິນ, ການຈັດແບ່ງຄວາມສ່ຽງ ລະຫວ່າງບັນດາຝ່າຍ, ຫລື ເປັນຜົນກະທົບຢ່າງຫລວງຫລາຍ ຕໍ່

ລະບົບການເງິນ, ການຈ່າຍ ການຮັບປະກັນ ຫລື ພັນທະອື່ນໆ ຂອງລັດຖະບານ ໂດຍກົງ ຫລື ທາງອ້ອມ ສູນການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ຕ້ອງນໍາເອົາຂໍ້ຕົກລົງ ໄປໃຫ້ ຄະນະກໍາມະການລົງທຶນ ພ້ອມກັບຂໍ້ສະເໜີແນະ.

**ມາດຕາ 23 ການຮັກສາຄວາມລັບ**

ເວັ້ນເສຍແຕ່ໄດ້ກໍານົດໄວ້ໃນກົດໝາຍ ຫຼື ຄໍາສັ່ງຂອງສານ, ອົງການຈັດຕັ້ງປະຕິບັດໂຄງການ, ສູນການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ແລະ ຄະນະກໍາມະການລົງທຶນ ຕ້ອງບໍ່ເປີດເຜີຍໃຫ້ແກ່ຝ່າຍທີສາມ ເນື້ອໃນຂອງຂໍ້ສະເໜີກ່ຽວກັບຄຸນນະວຸດທິ ແລະ ຂໍ້ສະເໜີທີ່ໄດ້ຮັບ ລວມທັງການປຶກສາຫາລື, ຈົດໝາຍພົວພັນ ຫຼື ການເຈລະຈາ ລະຫວ່າງ ອົງການຈັດຕັ້ງປະຕິບັດໂຄງການ ແລະ ຜູ້ເຂົ້າແຂ່ງຂັນປະມູນ, ຍົກເວັ້ນ ຈົດໝາຍສື່ສານ ກ່ຽວກັບຄໍາຖາມ ແລະ ຄໍາຄິດຄໍາເຫັນ ກ່ຽວກັບເອກະສານຄຸນນະວຸດທິ ເບື້ອງຕົ້ນ ຫຼື ໜັງສືເຊີນຍື່ນຂໍ້ສະເໜີ.

**ມາດຕາ 24 ບັນທຶກຂໍ້ມູນຂ່າວສານ**

ອົງການຈັດຕັ້ງປະຕິບັດໂຄງການ ຕ້ອງເກັບຮັກສາຢ່າງແທດເໝາະ ບັນທຶກຂໍ້ມູນຂ່າວ ສານ ກ່ຽວກັບການປະມູນ ຢ່າງໜ້ອຍ ສໍາລັບໄລຍະອາຍຸຂອງສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ.

**ມາດຕາ 25. ພຶດຕິກໍາສໍ້ລາດບັງຫຼວງ, ຫຼອກລວງສໍ້ໂກງ, ສົມຮູ້ຮ່ວມຄິດ.**

ທຸກຝ່າຍທີ່ກ່ຽວຂ້ອງ ລວມທັງຝ່າຍ ລັດ ແລະ ເອກະຊົນ ທີ່ກ່ຽວຂ້ອງກັບການປະມູນ ຈະຕ້ອງໂປ່ງໃສ, ມີຄວາມຮັບຜິດຊອບ ແລະ ບໍ່ມີພຶດຕິກໍາ ທີ່ພາໃຫ້ເກີດມີການສໍ້ລາດບັງຫຼວງ, ຫຼອກລວງສໍ້ໂກງ, ສົມຮູ້ຮ່ວມຄິດ ທີ່ພາໃຫ້ມີຜົນກະທົບທາງລົບ ຕໍ່ການປະມູນ ຫລື ລະບຽບການ ແລະ ເງື່ອນໄຂ ທີ່ລະບຸໄວ້ໃນດໍາລັດສະບັບນີ້

## ໝວດທີ IV
## ບົດບັນຍັດສຸດທ້າຍ

**ມາດຕາ 26. ການລະເມີດດໍາລັດສະບັບນີ້**

ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດດຳລັດສະບັບນີ້ ຕ້ອງຮັບຜິດຊອບຕາມລະບຽບ ກົດໝາຍຂອງ ສປປ ລາວ.

## ມາດຕາ 27. ການຈັດຕັ້ງປະຕິບັດ

**ມາດຕາ 27.1** ຄະນະກຳມະການລົງທຶນ, ສູນຄູ່ຮ່ວມພາກລັດ-ພາກເອກະຊົນ, ບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນ, ແລະ ບັນດາວິສາຫະກິດໂຄງການ, ຜູ້ພັດທະນາ ຫລື ນັກລົງທຶນ ທີ່ມີສ່ວນຮ່ວມໃນໂຄງການຄູ່ຮ່ວມພາກລັດ-ພາກເອກະຊົນ ມີໜ້າທີ່ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 27.2**

ນາຍົກລັດຖະມົນຕີ ສາມາດອອກລະບຽບການ, ຄຳສັ່ງ ແລະ/ຫຼື ບົດແນະນຳລະອຽດ ກ່ຽວກັບການຈັດຕັ້ງປະຕິບັດດຳລັດສະບັບນີ້.

**ມາດຕາ 27.3**

ຄະນະກຳມະການລົງທຶນ ສາມາດນຳສະເໜີລະບຽບການຈັດຕັ້ງປະຕິບັດ ແລະ ການດັດແກ້ດຳລັດສະບັບນີ້ ຕໍ່ນາຍົກລັດຖະມົນຕີ ເພື່ອພິຈາລະນາ.

**ມາດຕາ 2.74**

ສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ທີ່ໄດ້ຮັບອະນຸມັດໂດຍລັດຖະບານ ຕ້ອງມີຜົນນຳໃຊ້ ແລະ ມີຜົນສັກສິດ ຕະຫຼອດໄລຍະອາຍຸຂອງສັນຍາ ຕາມເງື່ອນໄຂທີ່ກຳນົດໄວ້ໃນສັນຍາດັ່ງກ່າວ. ທຸກການດັດແກ້ ຫຼື ການປ່ຽນແປງຂອງດຳລັດສະບັບນີ້ ຫຼື ຂອງນິຕິກຳຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະມີຜົນສັກສິດ ຕໍ່ກັບສັນຍາການເປັນຄູ່ຮ່ວມພາກລັດ-ພາກເອກະຊົນ ທີ່ເຮັດຂຶ້ນ ຫຼັງຈາກນິຕິກຳໃໝ່ ຫຼື ດັດແກ້ ໄດ້ຖືກຮັບຮອງແລ້ວເທົ່ານັ້ນ.

## ມາດຕາ 28. ຜົນສັກສິດ

ດຳລັດສະບັບນີ້ ແລະ ເອກະສານຄັດຕິດ ດຳລັດສະບັບນີ້ ປະກອບເປັນດຳລັດທັງໝົດ ແລະ ມີຜົນສັກສິດ ນັບແຕ່ 30ວັນ ຫລັງຈາກມື້ລົງລາຍເຊັນ.

ດຳລັດສະບັບນີ້ ສາມາດບັງຄັບປະຕິບັດ ທາງດ້ານກົດໝາຍຢ່າງເປັນບູລິມະສິດ ແລະ ສອດຄ່ອງ ກັບກົດໝາຍ ແລະ ລະບຽບການທຸກສະບັບ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**